ການສະໜັບສະໜູນແມ່ຍິງ
ເພື່ອເອົາຊະນະຄວາມທຸກຍາກ

# ອົງການແຄຣ໌ ອົດສະຕາລີ
# ນະໂຍບາຍປົກປ້ອງສິດທິເດັກ

ກໍລະກົດ 2022

ການສະໜັບສະໜູນແມ່ຍິງ.
ເພື່ອເອົາຊະນະຄວາມທຸກຍາກ.

# ອົງການແຄຣ໌ ອົດສະຕາລີ
# ນະໂຍບາຍການປົກປ້ອງສິດທິເດັກ

ກໍລະກົດ 2022

3443-5227-2400v2

## ສາລະບານ


1. **ພາກແນະນຳ** 2

ຫຼັກການ 2

**2. ຈຸດປະສົງຂອງນະໂຍບາຍ** **2**

**3. ຂອບເຂດຂອງນະໂຍບາຍ** **3**

3.1 ການຮ່ວມມືກັບອົງການຈັດຕັ້ງອື່ນໆ 3

**4. ລາຍລະອຽດນະໂຍບາຍ** **4**

4.1 ການຜູກຈິດສຳນຶກ 4

4.2 ການຝຶກອົບຮົມ ແລະ ການພັດທະນາ 4

4.3 ການປະເມີນຄວາມສ່ຽງ 4

4.4 ວິທີການເອົາຜູ້ຖືກຜົນກະທົບເປັນຈຸດໃຈກາງ 5

4.5 ການຮັບສະໝັກ ແລະ ການຄັດເລືອກພະນັກງານ 5

4.6 ກົດລະບຽບຫຼັກຈັນຍາບັນ 7

4.7 ການນຳໃຊ້ຮູບພາບ, ຮູບແຕ້ມ, ວິດີໂອ ແລະ ຂໍ້ມູນຂອງເດັກນ້ອຍ 7

4.8 ກົນໄກການລາຍງານ 8

4.9 ການຕອບໂຕ້ຕໍ່ບົດລາຍງານ 11

**5. ນະໂຍບາຍ ແລະ ຂັ້ນຕອນທີ່ກ່ຽວຂ້ອງກົດລະບຽບການປ້ອງກັນເດັກ** **11**

**6. ເອກະສານສະໜັບສະໜູນ ແລະ ເອກະສານອ້າງອີງ** **11**

6.1 ນິຕິກຳ 11

6.2 ເອກະສານອົງການແຄຣ໌ອົດສະຕາລີ ແລະ ອົງການແຄຣ໌ນານາຊາດ 12

6.3 ເອກະສານຊ້ອນທ້າຍ 12

**7. ເຈົ້າຂອງນະໂຍບາຍ** **12**

**8. ການຈັດຕັ້ງປະຕິບັດ ແລະ ການສື່ສານ**

**9. ລາຍລະອຽດນະໂຍບາຍ** **12**

**10. ນິຍາມ** **12**

**ເອກະສານຊ້ອນທ້າຍ 1** **14**

ຄວາມຈຳເປັນໃນວຽກງານການປ້ອງກັນເດັກ 14

**ເອກະສານຊ້ອນທ້າຍ 2** **15**

ຫຼັກຈັນຍາບັນການປ້ອງກັນເດັກ

**ເອກະສານຊ້ອນທ້າຍ 3** **18**

ຫຼັກຈັນຍາບັນເພື່ອການປ້ອງກັນເດັກ 18

# 1. ພາກແນະນຳ

## ຫຼັກການ

ອົງການແຄຣ໌ ອິດສະຕາລີ ມີຄວາມມຸ້ງຫວັງເພື່ອສົ່ງເສີມ ແລະ ປົກປ້ອງ ຄວາມສົນໃຈຕ່າງໆ ແລະ ຄວາມປອດໄພຂອງເດັກ. ພວກເຮົາບໍ່ມີນະໂຍບາຍທີ່ຈະໂຍະຍານຕໍ່ການລະເມີດເດັກ ແລະ ການຫາຜົນປະໂຫຍດເດັກ.

ທຸກຄົນທີ່ເຮັດວຽກຢູ່ ຫຼື ກັບອົງການແຄຣ໌ອິດສະຕາລີ ມີຄວາມຮັບຜິດຊອບຕໍ່ການເບິ່ງແຍງ ແລະ ປົກປ້ອງເດັກ ແລະ ລາຍງານຂໍ້ມູນກ່ຽວກັບການລ່ວງລະເມີດເດັກ ຫຼື ການຫາຜົນປະໂຫຍດກັບເດັກ. ເມື່ອມີການລາຍງານເກີດຂຶ້ນ, ພວກເຮົານຳໃຊ້ວິທີການເອົາຜູ້ຖືກຜົນກະທົບເປັນຈຸດໃຈກາງ ແລະ ຮັບປະກັນວ່າຂະບວນການທັງໝົດແມ່ນສະໜັບສະໜູນການມີສ່ວນຮ່ວມຂອງເດັກ.

ການດຳເນີນການທັງໝົດທີ່ກ່ຽວຂ້ອງກັບເດັກ ແມ່ນຖືເອົາຜົນປະໂຫຍດສູງສຸດຂອງເດັກເປັນບຸລິມະສິດຫລັກ.

ອົງການແຄຣ໌ອິດສະຕາລີ ຮັບຮູ້ວ່າເດັກນ້ອຍໃນຊຸມຊົນທີ່ອົງການເຮັດວຽກນຳ ເປັນກຸ່ມທີ່ມີຄວາມສ່ຽງ ແລະ ຊຸມຊົນເຫຼົ່ານີ້ຕ້ອງໄດ້ອີງໃສ່ອົງການແຄຣ໌ອິດສະຕາລີໃນການສ້າງອົງການຈັດຕັ້ງທີ່ປອດໄພສຳລັບເດັກ. ອົງການແຄຣ໌ອິດສະຕາລີຕ້ອງການ ການສະໜັບສະໜູນ ແລະ ການຮ່ວມມືຈາກທຸກຄົນທີ່ເຮັດວຽກນຳ ເພື່ອໃຫ້ແນ່ໃຈວ່າສາມາດຈັດການຄວາມສ່ຽງຕໍ່ເດັກຢ່າງມີປະສິດທິພາບ.

ຄະນະປຶກສາອົງການແຄຣ໌ ມີໜ້າທີ່ຮັບຜິດຊອບສູງສຸດຕໍ່ນະໂຍບາຍການປົກປ້ອງສິດທິເດັກ ແລະ ຮຽກຮ້ອງໃຫ້ມີການລາຍງານເປັນປະຈຳຈາກຜູ້ຊີ້ນຳ ແລະ ບໍລິຫານງານກ່ຽວກັບການຈັດຕັ້ງປະຕິບັດນະໂຍບາຍດັ່ງກ່າວ ແລະ ລາຍງານຄວາມສ່ຽງຕ່າງໆ, ເພື່ອຂໍຄຳຊີ້ນຳໃຫ້ແກ່ອົງການຈາກຄະນະທີ່ປຶກສາ.

# 2. ຈຸດປະສົງຂອງນະໂຍບາຍ

ຈຸດປະສົງຂອງນະໂຍບາຍນີ້ແມ່ນ:

- ເພື່ອຢືນຢັນຄວາມມຸ່ງໝັ້ນຂອງອົງການແຄຣ໌ອິດສະຕາລີ ຕໍ່ກັບສະຫວັດດີພາບຂອງເດັກນ້ອຍ ແລະ ການປົກປ້ອງເຂົາເຈົ້າຈາກການຖືກລ່ວງລະເມີດ ແລະ ການຫາຜົນປະໂຫຍດ.
- ເພື່ອອຳນວຍຄວາມສະດວກໃນການປ້ອງກັນ ແລະ ຫຼຸດຜ່ອນຄວາມສ່ຽງຕໍ່ການລ່ວງລະເມີດ ແລະ ການຫາຜົນປະໂຫຍດເດັກທີ່ເກີດຂຶ້ນໃນຊຸມຊົນທີ່ອົງການແຄຣ໌ອິດສະຕາລີເຮັດວຽກຢູ່.
- ເພື່ອຈັດຕັ້ງປະຕິບັດວັດທະນະທຳຂອງອົງການໃຫ້ມີການສົ່ງເສີມການປົກປ້ອງເດັກ.
- ເພື່ອຈັດການຄວາມສ່ຽງຕ່າງໆ ທີ່ຜູ້ກະທຳຜິດທາງເພດ ອາດຈະຕັ້ງເປົ້າໝາຍໄວ້ ແລະ ພະຍາຍາມແຊກຊຶມເຂົ້າໃນອົງການແຄຣ໌ອິດສະຕາລີ ແລະ ອົງການຈັດຕັ້ງຄູ່ຮ່ວມງານຂອງພວກເຮົາເພື່ອເຂົ້າເຖິງເດັກນ້ອຍ.
- ເພື່ອຮັບປະກັນວ່າທຸກພາກສ່ວນໄດ້ຮັບຮູ້ເຖິງຄວາມຮັບຜິດຊອບຂອງຕົນໃນການກຳນົດໂອກາດທີ່ເປັນໄປໄດ້ໃນການລ່ວງລະເມີດ ແລະ ການຫາຜົນປະໂຫຍດຈາກເດັກທີ່ອາດຈະເກີດຂຶ້ນ ແລະ ເພື່ອສ້າງລະບົບການຄຸ້ມຄອງ ແລະ ຂະບວນການປ້ອງກັນຈາກການລ່ວງລະເມີດດັ່ງກ່າວ ແລະ/ຫຼື ການກວດສອບເມື່ອມີການລ່ວງລະເມີດເກີດຂຶ້ນ.
- ໃຫ້ຄຳແນະນຳແກ່ພະນັກງານ/ອາສາສະໝັກ/ຜູ້ໃຫ້ບໍລິການຈາກພາຍນອກ/ແຂກຢ້ຽມຢາມ ກ່ຽວກັບການຕອບໂຕ້ທີ່ຕ້ອງໄດ້ປະຕິບັດ ເວລາທີ່ພາກສ່ວນດັ່ງກ່າວສົງໄສວ່າມີການລ່ວງລະເມີດ ຫຼື ການຫາຜົນປະໂຫຍດຕໍ່ເດັກ.
- ໃຫ້ຄຳແນະນຳທີ່ຈະແຈ້ງແກ່ພະນັກງານ/ອາສາສະໝັກ/ຜູ້ໃຫ້ບໍລິການຈາກພາຍນອກ/ແຂກຢ້ຽມຢາມ ແມ່ນຫ້າມມີການລ່ວງລະເມີດ ແລະ ຫາຜົນປະໂຫຍດຕໍ່ເດັກນ້ອຍ.
- ຮັບປະກັນວ່າທຸກກໍລະນີຂອງການລ່ວງລະເມີດທີ່ມີການສົງໃສແມ່ນມີການລາຍງານ ແລະ ກວດສອບຢ່າງຄົບຖ້ວນ.
- ຮັບປະກັນວ່າບຸກຄົນທີ່ກ່ຽວຂ້ອງທັງໝົດຂອງໂຄງການທີ່ໄດ້ຮັບທຶນຈາກ ຫຼື ການຄຸ້ມຄອງຈາກອົງການແຄຣ໌ອິດສະຕາລີ ແມ່ນໄດ້ຮັບການຝຶກອົບຮົມໃນການປົກປ້ອງເດັກ ແລະ ເຂົ້າໃຈເຖິງພັນທະຂອງຕົນເອງຕໍ່ກັບການປົກປ້ອງເດັກໃນເວລາປະຕິບັດວຽກງານຂອງເຂົາເຈົ້າ, ລວມທັງການປະຕິບັດນຳໃຊ້ນະໂຍບາຍນີ້.

# 3. ຂອບເຂດຂອງນະໂຍບາຍ

ນະໂຍບາຍນີ້ມີຜົນບັງຄັບໃຊ້ກັບ:

- ພະນັກງານອົງການແຄຣ໌ອິດສະຕາລີ, ອາສາສະໝັກ ແລະ ນັກຮຽນຝຶກງານ, ລວມທັງຄະນະຊີ້ນໍາ, ຄະນະທີ່ປຶກສາ ແລະ ຄະນະຜູ້ສັງເກດການ (**ບຸກຄະລາກອນຂອງແຄຣ໌ອິດສະຕາລີ**)
- ພະນັກງານທຸກຄົນ, ອາສາສະໝັກ ແລະ ນັກຮຽນຝຶກງານຂອງອົງການແຄຣ໌ນານາຊາດປະຈໍາປະເທດທີ່ເປັນສະມາຊິກຂອງ ອົງການແຄຣ໌ອິດສະຕາລີ, ແລະ ພະນັກງານ, ອາສາສະໝັກ ແລະ ນັກຮຽນຝຶກງານຂອງອົງການແຄຣ໌ນານາຊາດປະຈໍາປະເທດ ທີ່ມີສ່ວນຮ່ວມໂດຍກົງໃນການປະຕິບັດແຜນງານ ຫຼື ໂຄງການທີ່ຄຸ້ມຄອງ ຫຼືໃຫ້ທຶນທັງໝົດ ຫລື ສ່ວນໃດນຶ່ງຈາກແຄຣ໌ອິດສະ ຕາລີ (ເອີ້ນວ່າ**ຄູ່ຮ່ວມງານຂອງແຄຣ໌**)

ຄໍາວ່າ "**ຄົນຂອງແຄຣ໌**" ຫຼື "**ບຸກຄົນຂອງແຄຣ໌**" ໃນນະໂຍບາຍນີ້ ໝາຍເຖິງ ບຸກຄະລາກອນຂອງແຄຣ໌ອິດສະຕາລີ ແລະ ຄູ່ຮ່ວມງານຂອງແຄຣ໌.

- ຜູ້ໃຫ້ບໍລິການຈາກພາຍນອກທີ່ຈ້າງໂດຍແຄຣ໌ອິດສະຕາລີ ຫຼື ໂດຍຄູ່ຮ່ວມງານຂອງແຄຣ໌ ໃນນາມຂອງແຄຣ໌ອິດສະຕາລີ, ຜູ້ທີ່ມີໜ້າທີ່ ທີ່ອາດຈະມີການຕິດຕໍ່ພົວພັນກັບເດັກນ້ອຍ, ຊຶ່ງປະກອບມີຜູ້ຮັບເຫມົາ, ທີ່ປຶກສາ, ຜູ້ຂາຍ ແລະ ຄູ່ຮ່ວມງານອື່ນໆ. ລວມທັງຄູ່ຮ່ວມງານ ຫຼື ອົງການທີ່ໄດ້ຮັບທຶນ ຫຼື ເປັນຄູ່ສັນຍາຍ່ອຍ ໂດຍແຄຣ໌ອິດສະຕາລີ ຫຼື ຄູ່ຮ່ວມງານຂອງແຄຣ໌ ແລະ ບຸກຄະລາກອນຂອງເຂົາເຈົ້າ ທີ່ອາດຈະການຕິດຕໍ່ກັບເດັກນ້ອຍ (ເອີ້ນວ່າ**ຄູ່ຮ່ວມງານ**).

ຄໍາໝັ້ນສັນຍາຂອງອົງການແຄຣ໌ອິດສະຕາລີ ທີ່ຈະປົກປ້ອງຕໍ່ຄວາມປອດໄພ ແລະ ຜົນປະໂຫຍດທີ່ດີທີ່ສຸດຂອງເດັກນ້ອຍລວມທັງລະຫວ່າງການຢ້ຽມຢາມໂຄງການທີ່ຄຸ້ມຄອງໂດຍອົງການແຄຣ໌ອິດສະຕາລີ ຫຼື ໄດ້ຮັບທຶນຊ່ວຍເຫຼືອຈາກປະຊາຊົນ ລວມທັງຜູ້ໃຫ້ທຶນ, ພະນັກງານລັດຖະບານ ຫຼື ສະມາຊິກຄອບຄົວຂອງບຸກຄະລາກອນຂອງແຄຣ໌ອິດສະຕາລີ (ເອີ້ນວ່າ**ແຂກມາຢ້ຽມຢາມ**). ເຖິງແນວໃດກໍ່ຕາມ, ອົງການແຄຣ໌ອິດສະຕາລີ ຍອມຮັບວ່າ ບາງຂະບວນການທີ່ລະບຸໄວ້ໃນນະໂຍບາຍນີ້ອາດຈະບໍ່ເໝາະສົມ ຫຼື ປະຕິບັດຕົວຈິງສໍາລັບແຂກມາຢ້ຽມຢາມທີ່ກ່າວມາຂ້າງເທິງ. ດັ່ງນັ້ນ, ການປະຕິບັດໃນການຕິດຕາມລະຫວ່າງການຢ້ຽມຢາມ ແລະ ການຮັບປະກັນຄວາມປອດໄພຂອງເດັກນ້ອຍແມ່ນຄວາມຮັບຜິດຊອບຂອງອົງການແຄຣ໌ອິດສະຕາລີ ຫຼື ແມ່ນຄວາມຮັບຜິດຊອບໃນການຄຸ້ມຄອງຂອງຄູ່ຮ່ວມງານຂອງແຄຣ໌ທີ່ເປັນຜູ້ອໍານວຍຄວາມສະດວກໃຫ້ແກ່ການມາຢ້ຽມຢາມເຫຼົ່ານັ້ນ.

## 3.1 ການຮ່ວມມືກັບອົງການຈັດຕັ້ງອື່ນໆ

ອົງການແຄຣ໌ອິດສະຕາລີມີຄວາມມຸ່ງໝັ້ນໃນການຮັບປະກັນໃຫ້ທຸກຄົນປະຕິບັດຕາມນະໂຍບາຍນີ້. ນີ້ໝາຍຄວາມວ່າ ຄົນຂອງແຄຣ໌ ແລະ ຄູ່ຮ່ວມງານຕ້ອງ:

- ຮັບປະກັນວ່າບຸກຄະລາກອນເຂົ້າໃຈພັນທະຂອງເຂົາເຈົ້າໃນການປົກປ້ອງເດັກ ໃນເວລາປະຕິບັດວຽກງານຂອງຕົນ
- ມີກົນໄກການໃຫ້ຄໍາຄິດເຫັນຈາກຊຸມຊົນທີ່ຈະແຈ້ງເໝາະສົມກັບສະພາບໃນທ້ອງຖິ່ນ ແລະ ສາມາດເຂົ້າເຖິງຜູ້ເຂົ້າຮ່ວມໂຄງການທັງໝົດ (ໂດຍສະເພາະແມ່ນເດັກນ້ອຍ)
- ມີກົນໄກ ຫຼື ຂັ້ນຕອນການລາຍງານທີ່ຈະແຈ້ງສໍາລັບບຸກຄະລາກອນຂອງພວກເຂົາເພື່ອລາຍງານຄວາມກັງວົນຂອງການຫາຜົນປະໂຫຍດກັບເດັກ ຫຼື ການລ່ວງລະເມີດ; ແລະ
- ລາຍງານໂດຍທັນທີ ກໍລະນີທີ່ສົງໃສ ຫຼື ຖືກກ່າວຫາວ່າມີການຫາຜົນປະໂຫຍດ ຫຼື ການລ່ວງລະເມີດເດັກ.

ຈະມີການປະເມີນຜົນເປັນປະຈໍາ, ຢ່າງໜ້ອຍທຸກໆສາມປີ ຫຼື ເລື້ອຍກວ່ານັ້ນ ຕາມການກໍານົດໂດຍການປະເມີນຄວາມສ່ຽງ, ປະຕິບັດການປ້ອງກັນເດັກ ແລະ ການປົກປ້ອງເດັກຂອງຄູ່ຮ່ວມງານ, ເພື່ອຮັບປະກັນນະໂຍບາຍ ແລະ ຂັ້ນຕອນການຈັດຕັ້ງປະຕິບັດຢ່າງສອດຄ່ອງ ແລະ ມີປະສິດທິຜົນ. ທັງໝົດນີ້ຈະຕ້ອງປະຕິບັດໂດຍ:

- ໂດຍ ອົງການແຄຣ໌ອິດສະຕາລີ ສໍາລັບຄູ່ຮ່ວມງານຂອງແຄຣ໌
- ໂດຍ ຄົນຂອງແຄຣ໌ ສໍາລັບຄູ່ຮ່ວມງານ

ຄົນຂອງແຄຣ໌ຈະໃຫ້ຈະສະຫນັບສະຫນູນຄູ່ຮ່ວມງານເພື່ອສ້າງຄວາມເຂັ້ມແຂງໃນການປະຕິບັດວຽກງານການປົກປ້ອງ, ລວມທັງການທົບທວນຄືນນະໂຍບາຍ ແລະ ການປະຕິບັດຕົວຈິງໃນການປ້ອງກັນເດັກ ແລະ ການສະຫນອງຂໍ້ມູນ ແລະ ການຝຶກອົບຮົມ.

ຄົນຂອງແຄຣ໌ຈະຮັບປະກັນການມີສ່ວນຮ່ວມຂອງຄູ່ຮ່ວມງານຄື:

- ນຳໃຊ້ນະໂຍບາຍນີ້ ຫຼື ນຳໃຊ້ນະໂຍບາຍຂອງຄູ່ຮ່ວມງານຂອງອົງການແຄຣ໌ ຫຼື ນະໂຍບາຍການປ້ອງກັນເດັກຂອງຄູ່ຮ່ວມງານເອງ (ນະໂຍບາຍຂອງຄູ່ຮ່ວມງານ) ຖ້ານະໂຍບາຍດັ່ງກ່າວມີມາດຕະຖານ ແລະ ຂໍ້ກຳນົດດຽວກັນ.
- ໃນນັ້ນລວມເຖິງຂໍ້ບັງຄັບຕ່າງໆ ທີ່ຄູ່ຮ່ວມງານ ແລະ ບຸກຄະລາກອນຂອງເຂົາເຈົ້າຕ້ອງໄດ້ປະຕິບັດຕາມນະໂຍບາຍນີ້ (ຫຼື ນະໂຍບາຍຂອງຄູ່ຮ່ວມງານຖ້າມີ) ເຊັ່ນກົດລະບຽບການປະພຶດເພື່ອການປົກປ້ອງເດັກທີ່ສອດຄ່ອງກັບມາດຕະຖານໃນນະໂຍບາຍນີ້.
- ລະບຸຢ່າງຊັດເຈນກ່ຽວກັບຄວາມຜິດພາດຂອງຄູ່ຮ່ວມງານ ແລະ ບຸກຄະລາກອນໃນການປະຕິບັດນະໂຍບາຍນີ້ (ຫຼື ນະໂຍບາຍຂອງຄູ່ຮ່ວມງານຖ້າມີ), ລວມທັງຄວາມຜິດພາດໃນການລາຍງານກໍລະນີທີ່ສົງໃສ ຫຼື ຂໍ້ກ່າວຫາໃນການລ່ວງລະເມີດເດັກ ຫຼື ການຫາຜົນປະໂຫຍດກັບເດັກ ຫຼື ການບໍ່ປະຕິບັດຕາມນະໂຍບາຍ, ຊຶ່ງນຳໄປສູ່ການຢຸດຕິຂໍ້ຕົກລົງ ໂດຍອົງການແຄຣ໌ອິດສະຕາລີ ທີ່ມີຜົນສັກສິດໃນທັນທີ.

# 4. ລາຍລະອຽດຂອງນະໂຍບາຍ

## 4.1 ການຜູກຈິດສຳນຶກ

ຄົນຂອງແຄຣ໌ຈະຮັບປະກັນວ່າທຸກຄົນໃນຂອບເຂດຂອງນະໂຍບາຍນີ້ເຂົ້າໃຈຜົນກະທົບຂອງການຫາຜົນປະໂຫຍດ ແລະ ການລ່ວງລະເມີດເດັກ ແລະ ປັດໃຈທີ່ສາມາດເພີ່ມຄວາມສ່ຽງ ແລະ ເປັນເຫດທີ່ສ່ຽງຕໍ່ເດັກ. ຄວາມຮູ້ ແລະ ຄວາມເຂົ້າໃຈຈະຖືກເສີມສ້າງ ໂດຍຜ່ານການຝຶກອົບຮົມ, ການສື່ສານພາຍໃນ ແລະ ລວມເອົາ ການປົກປ້ອງເດັກເຂົ້າໃນຂະບວນຂອງກິດຈະກຳ ແລະ ຂະບວນການເຮັດວຽກ.

## 4.2 ການຝຶກອົບຮົມ ແລະ ການພັດທະນາ

ຄົນຂອງແຄຣ໌ ແລະ ຄູ່ຮ່ວມງານ ທຸກຄົນ ຈະໄດ້ຮັບຂໍ້ມູນກ່ຽວກັບນະໂຍບາຍການປ້ອງກັນເດັກຂອງອົງການແຄຣ໌ອິດສະຕາລີ ແລະ ກົດລະບຽບການປົກປ້ອງເດັກ (ຕາມທີ່ລະບຸໄວ້ໃນຂໍ້ 4.7 ຂ້າງລຸ່ມນີ້), ໂດຍສະເພາະກັບຄູ່ຮ່ວມງານຂອງອົງການທີ່ ຍັງບໍ່ທັນໄດ້ນຳໃຊ້ນະໂຍບາຍ ແລະ ກົດລະບຽບການປົກປ້ອງເດັກ.

ຄົນຂອງແຄຣ໌ໃໝ່ ແລະ ຄູ່ຮ່ວມງານໃໝ່ ຈະໄດ້ຮັບການຝຶກອົບຮົມກ່ຽວກັບການປ້ອງກັນເດັກ ແລະ ກົນໄກການລາຍງານ ໂດຍຜ່ານການປະຖົມນິເທດ ຫຼື ການແນະນຳໂຄງການ ແລະ ຈັດຂຶ້ນເປັນປະຈຳ (ທຸກໆ 2 ປີ).

## 4.3 ການປະເມີນຄວາມສ່ຽງ

ວິທີການປະເມີນຄວາມສ່ຽງຂອງອົງການແຄຣ໌ອິດສະຕາລີ ຊຶ່ງມີການປະເມີນຢ່າງເປັນລະບົບ ແລະ ບໍລິຫານຈັດການຄວາມສ່ຽງຂອງການຫາຜົນປະໂຫຍດກັບເດັກ ແລະ ການລ່ວງລະເມີດເດັກ.
ການປະເມີນຄວາມສ່ຽງທີ່ມີການປະສົມປະສານເຂົ້າໃນຂະບວນການ ການອອກແບບ, ການວາງແຜນ, ຈັດຕັ້ງປະຕິບັດ ແລະ ການຕິດຕາມກິດຈະກຳຂອງແຜນງານ ເພື່ອໃຫ້ພວກເຮົາສາມາດຮັບປະກັນວ່າເດັກມີຄວາມປອດໄພ.
ໂດຍສະເພາະ, ຄົນຂອງແຄຣ໌ ຈະ:

- ປະເມີນ ເງື່ອນໄຂສະພາບແວດລ້ອມ ແລະ ຄວາມສ່ຽງຕໍ່ເດັກ ຈາກສະພາບຕົວຈິງຂອງໂຄງການ
- ກຳນົດລັກສະນະຂອງວຽກ ແລະ ຂອບເຂດຂອງການຕິດຕໍ່ພົວພັນກັບເດັກ ໃນກິດຈະກຳໂຄງການທີ່ເຂົ້າຮ່ວມ. ລວມທັງການຕິດຕໍ່ພົວພັນແບບບັງເອີນ ຫຼື ແບບທາງອ້ອມ
- ກຳນົດວ່າຄວນມີການປະເມີນການປ້ອງກັນເດັກ ແລະ ການປົກປ້ອງເດັກ ຫຼື ບໍ່:
  - ຖ້າບໍ່ມີການຕິດຕໍ່ພົວພັນກັບເດັກ, ລວມທັງການຕິດຕໍ່ແບບທາງອ້ອມ, ບໍ່ຈຳເປັນຕ້ອງມີການປະເມີນຄວາມສ່ຽງ. ການຕັດສິນໃຈ ແລະ ການອະນຸມັດນີ້ຄວນຈະຖືກບັນທຶກເປັນເອກະສານ.
  - ຖ້າແຜນງານ ຫລືໂຄງການ ມີຄວາມກ່ຽວຂ້ອງກັບການເຮັດວຽກ ຫຼື ມີການຕິດຕໍ່ກັບເດັກນ້ອຍ (ລວມທັງການຕິດຕໍ່ແບບທາງອ້ອມ)

ຄວນດຳເນີນການປະເມີນຄວາມສ່ຽງໃນການປ້ອງກັນເດັກ ແລະ ປົກປ້ອງເດັກ. ໃນນີ້ຄວນລວມເຖິງການປະເມີນເຖິງຄວາມສາມາດໃນການປ້ອງກັນ ແລະ ປົກປ້ອງເດັກຂອງຄູ່ຮ່ວມງານທີ່ມີຢູ່ແລ້ວ ຫຼື ຄູ່ຮ່ວມງານໃໝ່.

- ກຳນົດຄວາມສ່ຽງຕໍ່ເດັກ ແລະ ລະບຸສິ່ງໃດທີ່ຄວນຄວບຄຸມເພີ່ມເຕີມ, ຖ້າມີ, ທີ່ຈຳເປັນຕ້ອງຫຼຸດຜ່ອນຄວາມສ່ຽງເຫລົ່ານັ້ນ. ການຕັດສິນໃຈ ແລະ ການອະນຸມັດນີ້ຄວນມີການບັນທຶກເປັນເອກະສານ.
- ກຳນົດຕາຕະລາງ, ການຕິດຕາມ ແລະ ການລາຍງານ ເມື່ອມີລະບົບການຄວບຄຸມ ແລະ ມີການປະເມີນການ ການປະຕິບັດງານວ່າມີປະສິດທິພາບ ຫຼື ບໍ່.
- ທົບທວນ ແລະ ອັບເດດການລົງທະບຽນຄວາມສ່ຽງທຸກປີ ຫຼື ເລື້ອຍກ່ວານັ້ນໃນກໍລະນີທີ່ມີການປ່ຽນແປງອັນໃຫຍ່ຕໍ່ສະພາບແວດລ້ອມຂອງການດຳເນີນງານ.

## 4.4 ວິທີການເອົາຜູ້ຖືກຜົນກະທົບເປັນຈຸດໃຈກາງ

ອົງການແຄຣ໌ອິດສະຕາລີ ມຸ່ງໝັ້ນຕໍ່ກັບວິທີການເອົາຜູ້ຖືກຜົນກະທົບເປັນຈຸດໃຈກາງໃນການມີສ່ວນຮ່ວມກັບຜູ້ທີ່ມີປະສົບການຖືກລ່ວງລະເມີດ ຫຼື ຫາຜົນປະໂຫຍດ. ຊຶ່ງໝາຍຄວາມວ່າເມື່ອຜູ້ຖືກຜົນກະທົບເປັນເດັກນ້ອຍ, ພວກເຮົາຈະນຳໃຊ້ວິທີການເອົາເດັກເປັນຈຸດໃຈກາງ, ໃນຂະນະທີ່ຮັບຮູ້ ແລະ ໃຫ້ການສະໜັບສະໜູນສະພາບຄອບຄົວຂອງເດັກ, ບໍ່ວ່າຈະຢູ່ໃນຮູບແບບໃດກໍ່ຕາມ. ການປະຕິບັດທັງຫມົດແມ່ນຕ້ອງໃຫ້ເຫມາະສົມກັບໄລຍະການພັດທະນາຂອງເດັກແຕ່ລະຄົນ ແລະ ສະຖານະການຂອງເດັກ.

**ເດັກມີສິດທີ່ຈະ:**

- ໄດ້ຮັບຄວາມເປັນສ່ວນຕົວ ແລະ ຮັກສາເປັນຄວາມລັບ
- ໄດ້ຮັບການປະຕິບັດດ້ວຍກຽດສັກສີ ແລະ ຄວາມເຄົາລົບນັບຖື ແລະ ບໍ່ໃຫ້ມີທັດສະນະຄະຕິກ່າວໂທດຕໍ່ຜູ້ຖືກເຄາະຮ້າຍ
- ມີຂໍ້ມູນຄົບຖ້ວນສະໜອງໃຫ້ເດັກ ແລະ ຄອບຄົວຂອງເດັກໃນພາສາທີ່ເໝາະສົມກັບອາຍຸຂອງເຂົາເຈົ້າ ແລະ ຜ່ານນາຍພາສາຖ້າຈຳເປັນ
- ເຂົ້າຮ່ວມໃນການຕັດສິນໃຈກ່ຽວກັບຂັ້ນຕອນການປະຕິບັດໃນການຮັບມືກັບການລ່ວງລະເມີດ ຫຼື ການຫາຜົນປະໂຫຍດຕໍ່ເດັກ ຕາມຄວາມເໝາະສົມຕາມອາຍຸ ແລະ ໄລຍະພັດທະນາການຂອງເດັກ ແລະ ຮ່ວມກັບຄອບຄົວ ຫຼື ຜູ້ສະໜັບສະໜູນທີ່ເຊື່ອຖືໄດ້ (ຕາມທີ່ກຳນົດໄວ້ໃນການປຶກສາຫາລືກັບເດັກ)
- ບໍ່ຢູ່ພາຍໃຕ້ການຈຳແນກໂດຍອີງໃສ່ລັກສະນະຕ່າງໆເຊັ່ນ: ເພດ, ອາຍຸ, ເຊື້ອຊາດ/ຊົນເຜົ່າ, ຄວາມເຊື່ອທາງສາສະໜາ, ຄອບຄົວ ຫຼື ພື້ນຖານສັງຄົມ, ສະຖານະພາບການຈ້າງງານ, ຄວາມສາມາດ, ທັດສະນະທາງເພດ, ສະຖານະຕິດເຊື້ອເອັຊ HIV ຫຼື ລັກສະນະອື່ນໆ.
- ຖືກຖາມກ່ຽວກັບແມ່ນຫຍັງທີ່ເຮັດໃຫ້ເຂົາຮູ້ສຶກປອດໄພ ແລະ ບໍ່ປອດໄພ, ແລະ ຢູ່ໃນສະພາບແວດລ້ອມແຫ່ງຄວາມໄວ້ເນື້ອເຊື່ອໃຈທີ່ສ້າງຂຶ້ນສຳລັບເຂົາ, ເພື່ອຊຸກຍູ້ໃຫ້ເດັກຮູ້ສຶກມີອຳນາດພຽງພໍທີ່ຈະສະແດງອອກຖ້າຫາກວ່າເຂົາມີຄວາມກັງວົນຕໍ່ກັບຂະບວນການ ຫຼື ມີຄວາມຮູ້ສຶກບໍ່ປອດໄພ.

ຄົນຂອງແຄຣ໌ ຈະສົ່ງຕໍ່ຜູ້ຖືກຜົນກະທົບຈາກການຖືກເຄາະຮ້າຍໃຫ້ໜ່ວຍງານຊ່ວຍເຫລືອ ແລະ ຜູ້ໃຫ້ບໍລິການສຸກເສີນ/ຜູ້ໃຫ້ຄຳປຶກ ແລະ ກວມເອົາຄ່າໃຊ້ຈ່າຍ/ຄວາມຕ້ອງການຂັ້ນພື້ນຖານຕາມຄວາມເໝາະສົມ. ຄົນຂອງແຄຣ໌ຈະເຮັດວຽກໃນໂຄງສ້າງຂອງອຳນາດການປົກຄອງຂອງລັດທີ່ສ້າງຕັ້ງຂຶ້ນເພື່ອສະໜັບສະໜູນການຕອບໂຕ້ທີ່ປອດໄພຕໍ່ເດັກນ້ອຍ.

## 4.5 ການຮັບສະໝັກ ແລະ ການຄັດເລືອກພະນັກງານ

ຄົນຂອງແຄຣ໌ ຈະບໍ່ຈ້າງງານໂດຍເຈດຕະນາ ຫຼື ພົວພັນກັບຜູ້ທີ່ກໍ່ໃຫ້ເກີດມີຄວາມສ່ຽງຕໍ່ເດັກນ້ອຍ. ອົງການແຄຣ໌ອິດສະຕາລີ ມຸ່ງໝັ້ນທີ່ຈະປ້ອງກັນບໍ່ໃຫ້ບຸກຄົນທີ່ມີຄວາມສ່ຽງເຮັດວຽກກັບເດັກນ້ອຍ.

ຄົນຂອງແຄຣ໌ ຈະປະຕິບັດຕາມຄຳແນະນຳຢ່າງເຂັ້ມງວດໃນຂະບວນການຮັບສະໝັກບຸກຄະລາກອນ. ຄຳແນະນຳກ່ຽວກັບຂະບວນການ

ຮັບພະນັກງານຈະຖືກທົບທວນຄືນ ແລະ ປັບປຸງເປັນປະຈຳ ເພື່ອຮັບປະກັນວ່າມີຄວາມສອດຄ່ອງກັບມາດຕະຖານການຮັບສະໝັກ ແລະ ການຄັດເລືອກທີ່ປອດໄພສໍາລັບເດັກຢ່າງຖືກຕ້ອງ.

ຄໍາແນະນໍາໃນການຮັບສະໝັກພະນັກງານລວມມີ ຂະບວນການກວດກາການຮັບພະນັກງານມີດັ່ງນີ້:

- ຄໍາຊີ້ແຈງທີ່ຢັ້ງຢືນຕໍ່ກັບຄວາມມຸ່ງໝັ້ນຂອງອົງການແຄຣ໌ໃນການປ້ອງກັນເດັກໃນທຸກໆການປະກາດຮັບສະໝັກ ແລະ ໃນລາຍລະອຽດໜ້າວຽກ.
- ຜູ້ສະໝັກຈະໄດ້ຮັບການເຂົ້າເຖິງນະໂຍບາຍການປ້ອງກັນເດັກຂອງອົງການແຄຣ໌ອົດສະຕາລີ (ຫຼື ນະໂຍບາຍຂອງຄູ່ຮ່ວມງານອົງການແຄຣ໌) ແລະ ກົດລະບຽບສໍາລັບການປົກປ້ອງເດັກໃນລະຫວ່າງຂະບວນການຮັບສະໝັກ ແລະ ຂະບວນການຮັບພະນັກງານໃໝ່.
- ການສໍາພາດທັງໝົດຈະລວມເອົາຄໍາຖາມກ່ຽວກັບການປ້ອງກັນເດັກ. ສໍາລັບຕໍາແໜ່ງທີ່ກ່ຽວຂ້ອງກັບການພົວພັນເດັກນ້ອຍຈະປະກອບມີຄໍາຖາມກ່ຽວກັບພຶດຕິກໍາທີ່ສະເພາະເຈາະຈົງກັບຕໍາແໜ່ງນັ້ນໆ.
- ການກວດສອບທາງວາຈາກ່ຽວກັບຜູ້ທີ່ຈະໄດ້ຮັບຄັດເລືອກຕ້ອງມີການບັນທຶກເປັນລາຍລັກອັກສອນຊຶ່ງຕ້ອງດໍາເນີນກັບທຸກຕໍາແໜ່ງທີ່ມີການພົວພັນກັບເດັກນ້ອຍ.
- ຜູ້ສະໝັກທັງໝົດຕ້ອງຮຽກຮ້ອງໃຫ້ເປີດເຜີຍວ່າພວກເຂົາເຄີຍຖືກກ່າວຫາໃນຂໍ້ຫາການຫາຜົນປະໂຫຍດກັບເດັກ ຫຼືບໍ່.

### 4.5.1 ການກວດສອບປະຫວັດຄະດີອາຍາ

ການກວດສອບປະຫວັດຄະດີອາຍາ ຈະດໍາເນີນການກັບຄົນຂອງແຄຣ໌ທັງຫມົດ, ບໍ່ວ່າຈະເຮັດວຽກກັບເດັກນ້ອຍ ຫຼື ບໍ່, ແລະ ສໍາລັບຄູ່ຮ່ວມງານທີ່ອາດມີການພົວພັນກັບເດັກນ້ອຍ. ການກວດສອບປະຫັວດຈະຕ້ອງຖືກດໍາເນີນໃນແຕ່ລະປະເທດທີ່ບຸກຄົນອາໃສຢູ່ຢ່າງໜ້ອຍເປັນເວລາ 12 ເດືອນ ຫຼື ຫຼາຍກວ່ານັ້ນໃນ 5 ປີຜ່ານມາ, ແລະ ສໍາລັບບຸກຄົນທີ່ຖືສັນຊາດຂອງປະເທດນັ້ນໆ.

ໃນສະຖານະການທີ່ມີຂໍ້ຈໍາກັດ, ບ່ອນທີ່ບໍ່ເປັນໄປໄດ້ໃນການກວດສອບປະຫວັດ ຫຼື ເຮັດໃຫ້ເກີດມີຄວາມສ່ຽງຕໍ່ຜູ້ສະຫມັກໃນການເອົາຂໍ້ມູນທີ່ເຊື່ອຖືໄດ້, ດັ່ງນັ້ນ,ໃບຢັ້ງຢືນທີ່ທຽບເທົ່າໃບແຈ້ງໂທດ, ຫຼື ໃບທຽບເທົ່າທາງດ້ານກົດຫມາຍທ້ອງຖິ່ນ ອາດຖືກຍອມຮັບໄດ້. ເອກະສານນີ້ຕ້ອງລວມເຖິງການກ່າວຫາ ແລະ ການຕັດສິນໂທດ, ການຫາຜົນປະໂຫຍດກັບເດັກ ຫຼື ການກະທໍາຜິດທີ່ຮ້າຍແຮງອື່ນໆ. ໃນກໍລະນີເຫຼົ່ານີ້ ການກວດສອບປະຫັວດຈາກຜູ້ອ້າງອີງຈະດໍາເນີນການຢ່າງເຂັ້ມງວດ.

ການກວດສອບປະຫັວດຄະດີອາຍາຈະຖືກດໍາເນີນການສໍາລັບຄົນຂອງແຄຣ໌ ແລະ ຄູ່ຮ່ວມງານທີ່ມີຢູ່ແລ້ວຖ້າຫາກພວກເຂົາມີສ່ວນຮ່ວມໃນກິດຈະກໍາທາງອາຍາ, ຫຼື ກໍາລັງຢູ່ໃນຂະບວນການທາງວິໄນ ຫຼື ການດໍາເນີນຄະດີທາງກົດໝາຍການຫາຜົນປະໂຫຍດ ແລະ ການລ່ວງລະເມີດເດັກ - ຊຶ່ງພະນັກງານຕ້ອງລາຍງານ ແລະ ເປີດເຜີຍຕໍ່ອົງການແຄຣ໌ອົດສະຕາລີ ຫຼື ຄູ່ຮ່ວມງານຂອງອົງການແຄຣ໌ – ແລະ ໃນເວລາທີ່ພະນັກງານສະຫມັກຕໍາແໜ່ງທີ່ປະກາດພາຍໃນຂອງອົງການ.

ຄົນຂອງແຄຣ໌ ແລະ ຄູ່ຮ່ວມງານຕ້ອງແຈ້ງເປັນລາຍລັກອັກສອນໃນທັນທີ ໃຫ້ຜູ້ອໍານວຍການພະແນກຍຸດທະສາດ ແລະ ການບໍລິການຂອງອົງການແຄຣ໌ອົດສະຕາລີ ຖ້າຫາກວ່າພະນັກງານແຄຣ໌ ຫຼື ພະນັກງານຂອງຄູ່ຮ່ວມງານຖືກກ່າວຫາວ່າມີການກະທໍາຜິດ ຫຼື ຖືກຈັບ, ຫຼື ຖືກຕັດສິນລົງໂທດ, ການກະທໍາຜິດທາງອາຍາກ່ຽວກັບການລ່ວງລະເມີດເດັກ (ລວມທັງສື່ຮູບພາບລາມົກກ່ຽວກັບເດັກ) ຫຼື ການຫາຜົນປະໂຫຍດເດັກ.

### 4.5.2 ບຸກຄົນທີ່ມີຄວາມສ່ຽງຕໍ່ເດັກນ້ອຍ

ຄົນຂອງແຄຣ໌ ຈະບໍ່ຈ້າງ ຫຼື ມີສ່ວນຮ່ວມກັບບຸກຄົນທີ່ມີຄວາມສ່ຽງຕໍ່ເດັກນ້ອຍ ແລະ ຈະບໍ່ຈ້າງ ຫຼື ພົວພັນກັບບຸກຄົນທີ່ມີປະຫວັດຄະດີອາຍາ (ຫຼື ມີການແຈ້ງການ/ການອ້າງອີງທີ່ບໍ່ສາມາດກວດສອບປະຫວັດຄະດີອາຍາໄດ້) ລວມທັງມີການຕັດສິນລົງໂທດ ຫຼື ມີໂທດທີ່ກ່ຽວຂ້ອງດັ່ງລຸ່ມນີ້:

- ການກະທໍາຜິດທາງເພດຕໍ່ເດັກ ຫຼື ຜູ້ໃຫຍ່
- ການກະທໍາຜິດດ້ວຍການໃຊ້ຄວາມຮຸນແຮງຕໍ່ເດັກ ຫຼື ຜູ້ໃຫຍ່
- ທຸກການກະທໍາຜິດກ່ຽວກັບການລ່ວງລະເມີດທາງເພດກັບເດັກ

- ການສະກົດຮອຍຕາມເດັກ
- ຄວາມຜິດກ່ຽວກັບຢາເສບຕິດຢ່າງຮ້າຍແຮງ (ການໃຊ້ຢາເສບຕິດ ຫຼື ຈັດຫາຢາເສບຕິດໃຫ້ກັບເດັກນ້ອຍ)
- ການກະທຳຜິດດ້ວຍການໃຊ້ຄວາມຮຸນແຮງໃນຄອບຄົວ

ຖ້າການກວດສອບປະຫວັດຄະດີອາຍາຂອງຜູ້ສະໝັກລວມມີການກະທຳຜິດ ຫຼື ໂທດອື່ນໆ, ຖ້າຄົນຂອງແຄຣ໌ຈະດຳເນີນການປະເມີນຄວາມສ່ຽງເພື່ອຕັດສິນວ່າຜູ້ສະໝັກມີຄວາມສ່ຽງຕໍ່ເດັກນ້ອຍ ຫຼື ບໍ່.

## 4.6 ກົດລະບຽບຫຼັກຈັນຍາບັນ

ຄົນຂອງແຄຣ໌, ຄູ່ຮ່ວມງານ ແລະ ແຂກຜູ້ມາຢ້ຽມຢາມຈະຕ້ອງເຊັນ ແລະ ປະຕິບັດຕາມຫຼັກຈັນຍາບັນຂອງການປົກປ້ອງເດັກ (ເບິ່ງເອກະສານຊ້ອນທ້າຍ 2).

ສັນຍາການຈ້າງງານຂອງພະນັກງານແຄຣ໌ ຈະມີຂໍ້ບັງຄັບການໂຈະສັນຍາທັນທີເມື່ອພະນັກງານຖືກສືບສວນຈາກການລະເມີດນະໂຍບາຍນີ້ ຫຼື ກົດລະບຽບຈັນຍາບັນຂອງການປົກປ້ອງເດັກ.

ເອກະສານການສຳລັບຄູ່ຮ່ວມງານທີ່ມີສ່ວນພົວພັນກັບອົງການແຄຣ໌ອົດສະຕາລີ ຈະຕ້ອງໃຫ້ຊັດເຈນວ່າ ການລະເມີດນະໂຍບາຍ ແລະ ຂັ້ນຕອນການປົກປ້ອງເດັກຂອງແຄຣ໌ອົງສະຕາລີ, ແລະ ການລະເມີດກົດລະບຽບຈັນຍາບັນການປົກປ້ອງເດັກ, ຈະຖືກຖືວ່າເປັນການກະທຳຜິດຢ່າງຮ້າຍແຮງເຖິງຂັ້ນຍຸດສັນຍາ.

## 4.7 ການນຳໃຊ້ຮູບພາບ, ຮູບແຕ້ມ, ວິດີໂອ ແລະ ຂໍ້ມູນຂອງເດັກນ້ອຍ

ຮູບພາບ, ຮູບແຕ້ມ, ວິດີໂອ ຫຼື ອື່ນໆຂອງເດັກນ້ອຍ ແລະ ນັບທັງຂໍ້ມູນສ່ວນບຸກຄົນທີ່ກ່ຽວຂ້ອງກັບເດັກນ້ອຍ ເຖິງແມ່ນວ່າຈະມີການຕົກລົງກັນໃນການການດູແລ ແລະ ປົກປ້ອງເຂົາເຈົ້າແລ້ວ ຫຼື ອາດໄດ້ຮັບປະກັນວ່າບໍ່ເປັນການຫາຜົນປະໂຫຍດ ແຕ່ຈະບໍ່ສາມາດໂຄສະນາໂດຍຜ່ານຮູບແບບໃດໆຂອງສື່ມວນຊົນ, ລວມທັງສື່ສັງຄົມ ແລະ ທຸກໆຮູບແບບການສົ່ງຂໍ້ຄວາມອື່ນໆ. ຮູບພາບຂອງເດັກນ້ອຍແມ່ນບໍ່ໃຫ້ປະກອບຂໍ້ມູນລາຍລະອຽດທີ່ກ່ຽວຂ້ອງກັບທີ່ຢູ່ຂອງເຂົາເຈົ້າ. ຮູບພາບທີ່ມີຂໍ້ຄວາມທີ່ອາດຈະລະບຸຕົວຕົນຂອງເດັກແມ່ນຈະຕ້ອງເອົາອອກ.

ສຳລັບຄົນແຄຣ໌, ຄູ່ຮ່ວມງານ ແລະ ແຂກຢ້ຽມຢາມ ໃນການຖ່າຍຮູບ ຫຼື ສ້າງຮູບເງົາເດັກນ້ອຍ ແລະ ນຳໃຊ້ຮູບພາບຂອງເດັກນ້ອຍ ເພື່ອຈຸດປະສົງສຳລັບວຽກງານຈຳເປັນຕ້ອງປະຕິບັດດັ່ງລຸ່ມນີ້:

- ກ່ອນທີ່ຈະຖ່າຍຮູບ ຫຼື ຖ່າຍພາບເດັກນ້ອຍ, ຕ້ອງໄດ້ຮັບການຍິນຍອມເຫັນດີຈາກພໍ່ແມ່ ຫຼື ຜູ້ປົກຄອງເດັກ.
- ໃຫ້ແນ່ໃຈວ່າການຍິນຍອມເຫັນດີນີ້ປະກອບມີຂໍ້ມູນຄວາມສ່ຽງທີ່ຊັດເຈນກ່ຽວກັບສະພາບການ, ໂດຍສະເພາະບ່ອນທີ່ມີຄວາມກົດດັນສູງ ຫຼື ມີການເຄື່ອນຍ້າຍ.
- ອະທິບາຍໃຫ້ເດັກ ແລະ ພໍ່ແມ່ ຫຼື ຜູ້ປົກຄອງວ່າຮູບຖ່າຍ ຫຼື ຮູບເງົາຈະຖືກນຳໃຊ້ໄປແນວໃດ, ໃນພາສາທີ່ເໝາະສົມກັບອາຍຸຂອງເດັກ ແລະ ດ້ວຍນາຍພາສາຖ້າຈຳເປັນ.
- ເອົາໃຈໃສ່ເພື່ອຮັບປະກັນປະເພນີ ຫຼື ກົດລະບຽບຕ່າງໆຂອງທ້ອງຖິ່ນແມ່ນໄດ້ມີການນັບຖືປະຕິບັດໃນການຜະລິດຮູບພາບຕ່າງໆ ຫຼື ຖ່າຍຮູບເງົາເດັກນ້ອຍ.
- ຮັບປະກັນການຖ່າຍຮູບ, ຮູບແຕ້ມ ແລະ ຮູບເງົາຂອງເດັກນ້ອຍຖືກນຳສະເໜີໃນລັກສະນະທີ່ມີກຽດສັກສີ ແລະ ມີຄວາມເຄົາລົບນັບຖື ແລະ ບໍ່ຢູ່ໃນລັກສະນະທີ່ມີຄວາມສ່ຽງ, ມີໂປ້ມດ້ອຍ ຫຼື ອ່ອນແອ.
- ຮັບປະກັນວ່າເດັກນ້ອຍນຸ່ງເສື້ອຜ້າຢ່າງເໝາະສົມ ແລະ ບໍ່ຢູ່ໃນທ່າທີ ທີ່ອາດເບິ່ງວ່າເປັນການລ່ວງລະເມີດທາງເພດ ຫຼື ຍອມຈຳນົນ.
- ຮັບປະກັນວ່າຮູບພາບເດັກນ້ອຍທີ່ນຳສະເໜີແມ່ນໄປຕາມບໍລິບົດ ແລະ ຄວາມເປັນຈິງ.
- ໃຫ້ແນ່ໃຈວ່າເຄື່ອງໝາຍເອກະສານ, ຂໍ້ມູນ ຫຼື ຄຳອະທິບາຍຂໍ້ຄວາມ ແມ່ນບໍ່ເປີດເຜີຍຂໍ້ມູນທີ່ລະບຸຕົວຕົນຂອງເດັກນ້ອຍໃນ

ເວລາສົ່ງຮູບພາບທາງອີເລັກໂທຣນິກ ຫຼື ເຜີຍແຜ່ຮູບພາບໃນຮູບແບບໃດນຶ່ງ.

- ມີການອະທິບາຍວ່າການຍິນຍອມໃນການໃຊ້ຮູບພາບໃດໜຶ່ງສາມາດຖືກຖອນຄືນໄດ້ຖ້າຫາກພວກເຂົາປ່ຽນໃຈ.

## 4.8 ກົນໄກການລາຍງານ

ຄົນຂອງແຄຣ໌ ແລະ ຄູ່ຮ່ວມງານ ຈະຮັບປະກັນວ່າບຸກຄະລາກອນຂອງເຂົາເຈົ້າ ແລະ ຊຸມຊົນ (ລວມທັງເດັກນ້ອຍ) ທີ່ ອົງການແຄຣ໌ອົດສະຕາລີ ຄຸ້ມຄອງ ຫຼື ເປັນຜູ້ໃຫ້ທຶນ, ມີຄວາມຊັດເຈນກ່ຽວກັບຂັ້ນຕອນທີ່ຈະປະຕິບັດໃນເວລາທີ່ມີຄວາມກັງວົນເກີດຂຶ້ນກ່ຽວກັບຄວາມປອດໄພຂອງເດັກນ້ອຍ.
ຄົນຂອງແຄຣ໌ ແລະ ຄູ່ຮ່ວມງານແຕ່ພາກສ່ວນ ຈະມີຂັ້ນຕອນການລາຍງານການປ້ອງກັນເດັກສະເພາະຂອງປະເທດຂອງຕົນໂດຍຄຳນຶງເຖິງສະພາບການທ້ອງຖິ່ນ.
ການລາຍງານສາມາດລາຍງານໄດ້ໂດຍບຸກຄົນໃດນຶ່ງຜ່ານ CARELine: http://www.care.ethicspoint.com
ທຸກຂໍ້ກ່າວຫາ, ຄວາມເຊື່ອ, ຄວາມສົງໄສ ຫຼື ການເປີດເຜີຍການລ່ວງລະເມີດ ແລະ ການຫາຜົນປະໂຫຍດຕໍ່ເດັກ ຫຼື ການບໍ່ປະຕິບັດຕາມນະໂຍບາຍນີ້ ຫຼື ບໍ່ປະຕິບັດຕາມກົດລະບຽບຫຼັກຈັນຍາບັນຂອງການປ້ອງກັນເດັກຈະຕ້ອງຖືກລາຍງານໃຫ້ອົງການແຄຣ໌ອົດສະຕາລີທັນທີ ແລະ ຖ້າຈຳເປັນແມ່ນຕ້ອງໄດ້ລາຍງານຕໍ່ກະຊວງການຕ່າງປະເທດ ແລະ ການຄ້າອົດສະຕຣາລີ (DFAT).

ການລາຍງານຕໍ່ກະຊວງການຕ່າງປະເທດ ແລະ ການຄ້າ ອົດສະຕຣາລີ (DFAT) ແມ່ນຈະຖືກລາຍງານໂດຍຜູ້ອຳນວຍການພະແນກຍຸດທະສາດ ແລະ ການບໍລິການຂອງອົງການແຄຣ໌ອົດສະຕາລີ ຫຼື ບຸກຄົນທີ່ຮັບຜິດຊອບທີ່ໄດ້ຮັບມອບໝາຍ, ຕາມນະໂຍບາຍການປ້ອງກັນເດັກຂອງ ກະຊວງການຕ່າງປະເທດ ແລະ ການຄ້າອົດສະຕຣາລີ DFAT.

### 4.8.1 ການລາຍງານເຫດການ

ເປັນຂໍ້ບັງຄັບສຳລັບຄົນຂອງແຄຣ໌ ຫຼື ຄູ່ຮ່ວມງານທີ່ຮັບຮູ້ເຖິງການກະທຳຜິດ, ເຖິງວ່າຈະເປັນພຽງຄວາມເຊື່ອ, ການສົງໃສ ຫຼື ການເປີດເຜີຍໃນການລ່ວງລະເມີດ ຫຼື ການຫາຜົນປະໂຫຍດເດັກ (ຈະແມ່ນອະດີດ ຫຼື ປະຈຸບັນ), ຊຶ່ງກະທຳໂດຍຄົນຂອງແຄຣ໌, ຄູ່ຮ່ວມງານ ຫຼື ແຂກມາຢ້ຽມຢາມຂອງແຄຣ໌ ແມ່ນ ຕ້ອງລາຍງານໃຫ້ແຄຣ໌ທັນທີ. ການລາຍງານແມ່ນຜ່ານຜູ້ຮັບຜິດຊອບວຽກງານການປົກປ້ອງ, ຫົວໜ້າພະແນກບຸກຄະລາກອນ, ຫົວໜ້າອົງການປະຈຳປະເທດ ຫຼື ຜູ້ອຳນວຍພະແນກຍຸດທະສາດ ແລະ ການບໍລິການປະຈຳອົງການແຄຣ໌ ອົດສະຕາລີ ຫຼື ຜ່ານລະບົບສາຍດ່ວນ CARELine.

ຜູ້ອຳນວຍການພະແນກຍຸດທະສາດ ແລະ ການບໍລິການຂອງອົງການແຄຣ໌ອົດສະຕາລີ ຫຼື ຜູ້ອຳນວຍແຄຣ໌ປະຈຳປະເທດ (ຫຼື ຕົວແທນຂອງພວກເຂົາ) ຈະເປັນຜູ້ກຳນົດການຕິດຕາມທີ່ເຫມາະສົມ. ໃນກໍລະນີມີການລາຍງານທີ່ຈຳເປັນ, ຜູ້ອຳນວຍການພະແນກຍຸດທະສາດ ແລະ ການບໍລິການຂອງອົງການແຄຣ໌ອົດສະຕາລີ ແລະ ຜູ້ອຳນວຍແຄຣ໌ປະຈຳປະເທດທີ່ກ່ຽວຂ້ອງຈະຕ້ອງຮັບປະກັນວ່າຂໍ້ບັງຄັບໃຊ້ໃນການລາຍງານໄດ້ມີການປະຕິບັດ.

ຖ້າມີເດັກລາຍງານເຫດການ, ການຮັບຟັງເດັກ/ໄວໜຸ່ມຕ້ອງໄດ້ເອົາໃຈໃສ່ຢ່າງຈິງຈັງ. ເມື່ອມີການກ່າວຫາ ຫຼື ເປີດເຜີຍ, ຄວນມີການຕອບໂຕ້ທັນທີ, ໂດຍໃຫ້ເດັກ ແລະ ຜູ້ໃຫຍ່ມີຄວາມປອດໄພ, ເພື່ອປົກປ້ອງເດັກຈາກການລ່ວງລະເມີດ, ການຫາຜົນປະໂຫຍດ ຫຼື ການຕົກເປັນເຫຍື່ອທີ່ອາດຈະເກີດຂຶ້ນຕື່ມອີກ.

ຂໍ້ກ່າວຫາ ແລະ ຂະບວນການທີ່ຈະປະຕິບັດຄວນມີການແຈ້ງໃຫ້ຄອບຄົວຂອງເດັກທີ່ຖືກເຄາະຮ້າຍໄດ້ຮັບຮູ້ ແລະ ຄວນໄດ້ຮັບການປຶກສາຫາລືຕາມຄວາມເໝາະສົມ, ຂະບວນການນີ້ຈະໄດ້ຮັບການຊີ້ນຳ ແລະ ນຳພາໂດຍຜູ້ອຳນວຍການພະແນກຍຸດທະສາດ ແລະ ການບໍລິການຂອງອົງການແຄຣ໌ອົດສະຕາລີ ຫຼື ຜູ້ອຳນວຍການອົງການແຄຣ໌ປະຈຳປະເທດໃນການປຶກສາຫາລືກັບຜູ້ຖືກເຄາະຮ້າຍ ຫລື ຜູ້ຖືກຜົນກະທົບ.

### 4.8.2 ການບັນທຶກເຫດການ

ການກ່າວຫາສາມາດເຮັດໄດ້ໂດຍກົງຜ່ານກົນໄກການຕຳນິສົ່ງຂ່າວລະດັບຊຸມຊົນ. ຖ້າມີການລາຍງານຕໍ່ກັບຄົນຂອງແຄຣ໌ ຫຼື ຄູ່ຮ່ວມງານ, ພວກເຂົາຈະບັນທຶກການກ່າວຫາຢ່າງຄົບຖ້ວນ, ລວມທັງເວລາ, ສະຖານທີ່, ພະຍານ, ຮັບປະກັນວ່າການກ່າວຫາ ແລະ ລາຍລະອຽດຂອງຂໍ້ກ່າວຫານັ້ນຖືກບັນທຶກໂດຍຄຳເວົ້າຂອງຜູ້ຮ້ອງທຸກ. ບົດລາຍງານນີ້ຄວນຈະຖືກບັນທຶກໄວ້ໃນທັນທີ (ພາຍໃນ 24 ຊົ່ວໂມງຂອງການເປີດເຜີຍ) ແລະ ອາດຈະມີ

ຄວາມກ່ຽວຂ້ອງໃນການດຳເນີນຄະດີທາງກົດໝາຍຊຶ່ງເປັນຜົນມາຈາກເຫດການ.

ບົດລາຍງານທັງໝົດຕ້ອງຖືກສົ່ງໃຫ້ ຜູ້ອຳນວຍການພະແນກຍຸດທະສາດ ແລະກ ານບໍລິການຂອງແຄຣ໌ອົດສະຕາລີ ຫຼື ສົ່ງຫາຜູ້ອຳນວຍການປະຈຳປະເທດ.

ຖ້າເຫດການເກີດຂຶ້ນໃນອົດສະຕາລີ ຫຼື ກ່ຽວຂ້ອງກັບພົນລະເມືອງອົດສະຕາລີ ຫຼື ຜູ້ອາໃສຢູ່ອົດສະຕາລີ, ຜູ້ອຳນວຍການພະແນກຍຸດທະສາດ ແລະ ການບໍລິການຂອງແຄຣ໌ອົດສະຕາລີ ຈະປຶກສາກັບທີ່ປຶກສາທາງດ້ານກົດໝາຍ ແລະ ອົງການທີ່ເໝາະສົມ (ເຊັ່ນ: ຕຳຫຼວດລັດຖະບານກາງອົດສະຕາລີ, ECPAT, ພາກສ່ວນທີ່ກ່ຽວຂ້ອງກັບລາດຊະອານາຈັກ ແລະ ລັດ ຫຼື ເຂດປົກຄອງທີ່ກ່ຽວຂ້ອງ) ເພື່ອພິຈາລະນາຂະບວນການທີ່ເຫມາະສົມໃນການຕອບໂຕ້ຕໍ່ເຫດການດັ່ງກ່າວ.

ຜູ້ອຳນວຍການພະແນກຍຸດທະສາດ ແລະການບໍລິການຂອງແຄຣ໌ອົດສະຕາລີຈະແຈ້ງໃຫ້ກັບຜູ້ອຳນວຍການໃຫຍ່ ແລະ ຄະນະກຳມະການໄດ້ຮັບຊາບທັນທີ.

#### 4.8.3 ການຕິດຕາມການລາຍງານ

ໃນຕອນທ້າຍຂອງການຕອບໂຕ້ຕໍ່ການເປີດເຜີຍ ຫຼື ການກ່າວຫາ, ຜູ້ທີ່ລາຍງານ, ແລະຜູ້ຖືກເຄາະຮ້າຍ ຖ້າພວກເຂົາບໍ່ແມ່ນຄົນດຽວກັນ, ຄວນໃຫ້ໂອກາດທີ່ຈະໃຫ້ບຸກຄົນດັ່ງກ່າວໄດ້ປະກອບຄຳຄິດຄຳເຫັນກ່ຽວກັບຂະບວນການລາຍງານ.

ເມື່ອບຸກຄົນໃດຫນຶ່ງໄດ້ລາຍງານ ແລະ ເຊື່ອວ່າການດຳເນີນການບໍ່ໄດ້ແກ້ໄຂຢ່າງພຽງພໍ, ຊຸກຍູ້ໃຫ້ມີການຕິດຕາມເບື້ອງຕົ້ນກັບຜູ້ອຳນວຍການແຄຣ໌ປະຈຳປະເທດ ຫຼື ຜູ້ຮັບຜິດຊອບວຽກງານດ້ານການປົກປ້ອງ. ແລະ ຖ້າຫາກບຸກຄົນດັ່ງກ່າວຍັງສືບຕໍ່ເຊື່ອວ່າ ການດຳເນີນການຍັງບໍ່ພຽງພໍ, ການຕິດຕາມອາດຈະຖືກສົ່ງໄປຫາຜູ້ອຳນວຍການພະແນກຍຸດທະສາດ ແລະ ການບໍລິການຂອງແຄຣ໌ອົດສະຕາລີ ແລະ ຖ້າຈຳເປັນແມ່ນຈະໄດ້ໃຫ້ຕິດຕາມຜ່ານລະບົບການລາຍງານ, ຫຼື ຜ່ານCARE Line.

## 4.9 ການຕອບໂຕ້ຕໍ່ການລາຍງານ

ອົງການແຄຣ໌ຈະຮັບປະກັນວ່າມີການຕອບໂຕ້ ເພື່ອຊ່ວຍເຫລືອ ແລະ ປົກປ້ອງເດັກເມື່ອມີຄວາມເປັນຫວ່ງກ່ຽວກັບຄວາມເປັນໄປໄດ້ໃນການລ່ວງລະເມີດ ຫຼື ການຫາຜົນປະໂຫຍດທີ່ອາດເກີດຂຶ້ນ.

ໃນເວລາທີ່ຕອບໂຕ້ຕໍ່ຂໍ້ກ່າວຫາ, ອົງການແຄຣ໌ອົດສະຕາລີມີຄວາມຮັບຜິດຊອບເພື່ອຮັບປະກັນວ່າຄົນຂອງແຄຣ໌, ຄູ່ຮ່ວມງານ ແລະ ແຂກຜູ້ມາຢ້ຽມຢາມ ໄດ້ຮັບການປະຕິບັດຢ່າງຍຸຕິທຳ, ແລະ ນັບຖືສິດທິຂອງແຕ່ລະຄົນໃນລະຫວ່າງການສືບສວນ ແລະ ຂະບວນການທາງວິໄນທີ່ກ່ຽວຂ້ອງ.

ອົງການແຄຣ໌ຈະຮັບປະກັນວ່າທຸກຄົນທີ່ຮັບຜິດຊອບໃນການໄດ້ຮັບການລາຍງານມີຄວາມເຂົ້າໃຈກັບວິທີການປະຕິບັດຫນ້າທີ່ຂອງເຂົາເຈົ້າ ແລະ ຈັດການຢ່າງປອດໄພ ແລະ ເປັນຄວາມລັບ. ທຸກການປະຕິບັດການຕອບໂຕ້ທັງຫມົດແມ່ນຕ້ອງຜ່ານການປະເມີນຄວາມສ່ຽງຕໍ່ຜູ້ທີ່ກ່ຽວຂ້ອງທັງຫມົດ. ຂໍ້ມູນຕ່າງໆຈະຖືກແບ່ງປັນໃຫ້ສະເພາະໜ່ວຍງານທີ່ເໝາະສົມຊຶ່ງຈຳເປັນຕ້ອງຮູ້ຂໍ້ມູນດັ່ງກ່າວເທົ່ານັ້ນ.

ຜູ້ອຳນວຍການພະແນກຍຸດທະສາດ ແລະ ການບໍລິການຂອງອົງການແຄຣ໌ອົດສະຕາລີ ແລະ ຜູ້ອຳນວຍການປະຈຳປະເທດ ຕ້ອງມີການປະເມີນວ່າບົດລາຍງານໄດ້ມີການກ່າວຫາກ່ຽວກັບການລ່ວງລະເມີດເດັກ ຫລື ມີການຫາຜົນປະໂຫຍດຕໍ່ເດັກ ຫຼື ລະເມີດຕໍ່ນະໂຍບາຍການປ້ອງກັນເດັກ ຫຼື ກົດລະບຽບຈັນຍາບັນ ໂດຍຄົນຂອງແຄຣ໌. ຖ້າຫາກວ່າບົດລາຍງານມີຂໍ້ກ່າວຫາດັ່ງກ່າວ ການສືບສວນແມ່ນຈະຖືກດຳເນີນການ. ຖ້າບໍ່ດັ່ງນັ້ນ, ນະໂຍບາຍການຮ້ອງທຸກຈະຖືກປະຕິບັດ.

ການຕອບໂຕ້ອື່ນໆຈະປະຕິບັດຕາມການຕັດສິນໃຈ ທີ່ລວມມີການແຈ້ງໃຫ້ຜູ້ໃຫ້ທຶນທີ່ກ່ຽວຂ້ອງ (ລວມທັງ DFAT) ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງອື່ນໆ, ລວມທັງຕຳຫຼວດ. ການແຈ້ງໃຫ້ຜູ້ໃຫ້ທຶນຄວນຈະປະຕິບັດໂດຍບໍ່ຈຳເປັນລໍຖ້າຜົນການສືບສວນ.
ໜ່ວຍງານການໃຫ້ຄຳປຶກສາແບບມືອາຊີບຈະມີໃຫ້ບໍລິການແກ່ຄົນຂອງແຄຣ໌.

#### 4.9.1 ບຸກຄົນທີ່ຖືກສົງໃສ

ບຸກຄົນທີ່ຖືກສົງໃສ/ຜູ້ກະທຳຜິດຈະຖືກໂຈະສັນຍາຊົ່ວຄາວໃນຂະນະທີ່ການສືບສວນເກີດຂຶ້ນ. ພະນັກງານຂອງແຄຣ໌ອົດສະຕາລີ/ອົງການແຄຣ໌ໃນ ສປປ ລາວ ທີ່ຖືກໂຈະສັນຍາຈະໄດ້ຮັບເງິນເດືອນເຕັມ ແລະ ອົງການແຄຣ໌ອົດສະຕາລີຈະນຳໃຊ້ຂັ້ນຕອນຄວາມຍຸຕິທຳ

ໃນການຕັດສິນໃຈທີ່ສົ່ງຜົນກະທົບຕໍ່ສິດທິ ຫຼື ຜົນປະໂຫຍດຂອງບຸກຄົນ.

**4.9.2 ການຮັກສາຄວາມລັບ**

ການຮັກສາຄວາມລັບແມ່ນມີຄວາມສໍາຄັນຕໍ່ຂະບວນການລາຍງານທີ່ປອດໄພ, ຄວາມຍຸຕິທໍາ ແລະ ມີປະສິດທິພາບ. ເປັນທີ່ຍອມຮັບບໍ່ໄດ້ ( ແລະ ອາດຈະເປັນການໝິ່ນປະມາດ) ຖ້າປະເດັນການລ່ວງເມີດເດັກ ຫຼື ຂໍ້ມູນໃດໜຶ່ງທີ່ກ່ຽວຂ້ອງກັບການກ່າວຫາ ຫຼື ການເປີດເຜີຍໃນການການລ່ວງລະເມີດຖືກແລກປ່ຽນໃຫ້ກັບພາຍນອກຮັບຮູ້.

ຜູ້ທີ່ມີສ່ວນຮ່ວມທັງຫມົດຕ້ອງເຂົ້າໃຈຄວາມສໍາຄັນຕໍ່ຂະບວນການລາຍງານທີ່ກໍານົດໄວ້ເມື່ອມີບັນຫາເກີດຂຶ້ນ. ການຮັກສາຄວາມລັບໃນການປ້ອງກັນເດັກ, ຜູ້ແຈ້ງບອກ, ຜູ້ຕອບໂຕ້ ແລະ ອົງການຈັດຕັ້ງ, ແມ່ນຕ້ອງຮັບປະກັນຂະບວນການຢ່າງມີຄວາມຍຸຕິທໍາ ແລະ ຖືກຕ້ອງ.

**4.9.3 ການສືບສວນຂໍ້ກ່າວຫາ**

ການລ່ວງລະເມີດທາງດ້ານຮ່າງກາຍ ແລະ/ຫຼື ທາງເພດກັບເດັກຖືເປັນອາຊະຍາກໍາ. ຄົນຂອງແຄຣ໌ ຫຼື ຄູ່ຮ່ວມງານຈະແຈ້ງໃຫ້ເຈົ້າໜ້າທີ່ໃນປະເທດຕົ້ນທາງຂອງຜູ້ກະທໍາຜິດທີ່ຖືກກ່າວຫາ ແລະ ປະເທດເຈົ້າພາບ ເມື່ອມີເຫດຜົນອັນສົມຄວນໃນການລາຍງານການລ່ວງລະເມີດ, ໂດຍໃຫ້ຄໍານຶງເຖິງຄວາມປອດໄພຂອງຜູ້ຖືກເຄາະຮ້າຍ-ຜູ້ລອດຊີວິດເປັນຫຼັກ.

ຖ້າມີອົງການພາຍນອກທີ່ກ່ຽວຂ້ອງກັບເລື່ອງດັ່ງກ່າວ, ເຊັ່ນ: ຕໍາຫຼວດ ຫຼື ອົງການປົກຄອງ, ຄົນຂອງແຄຣ໌ຕ້ອງຖາມອົງການດັ່ງກ່າວວ່າພວກເຂົາຕ້ອງການໃຫ້ ຄົນຂອງແຄຣ໌ຄວນມີການດໍາເນີນການແນວໃດ ກ່ອນທີ່ຈະປະຕິບັດການສືບສວນພາຍໃນ. ຖ້າທິດທາງຂອງໜ່ວຍງານພາຍນອກສອດຄ່ອງກັບຄວາມຕັ້ງໃຈຂອງນະໂຍບາຍນີ້ ແລະ ກົດຫມາຍ, ການສືບສວນທີ່ດໍາເນີນໂດຍຄົນຂອງແຄຣ໌ຈະເປັນໄປຕາມທິດທາງຄໍາແນະນໍາເຫຼົ່ານັ້ນ.

ຂໍ້ກ່າວຫາທີ່ດໍາເນີນຢູ່ຕ່າງປະເທດຈະຕ້ອງພິຈາລະນາກົດໝາຍລະດັບປະເທດນັ້ນໆ ຫຼື ຂະບວນການພາຍໃນເພື່ອສືບສວນ ແລະ ແກ້ໄຂຂໍ້ກ່າວຫາ[1]

ການສືບສວນພາຍໃນຈະປະກອບດ້ວຍຂະບວນການທີ່ເປັນຄວາມລັບ, ລະອຽດ, ຍຸດຕິທໍາ ແລະ ທັນການ. ການສືບສວນອາດຈະປະກອບດ້ວຍການສໍາພາດກັບພະຍານ ແລະ ບຸກຄົນອື່ນໆຕາມຄວາມເຫມາະສົມ, ການລວບລວມຂໍ້ມູນກ່ຽວກັບການປະພຶດທີ່ຖືກກ່າວຫາ, ການລວບລວມເອກະສານ, ຫຼື ຂັ້ນຕອນອື່ນໆຕາມຄວາມເຫມາະສົມ ແລະ ສອດຄ່ອງກັບລະບຽບການສືບສວນ.

ບຸກຄົນທີ່ຖືກກ່າວຫາວ່າໄດ້ລະເມີດນະໂຍບາຍນີ້ຕ້ອງໄດ້ຮັບການຮັບຮູ້ຂໍ້ກ່າວຫາທີ່ມີລາຍລະອຽດພຽງພໍ ແລະ ຕ້ອງໄດ້ຮັບໂອກາດທີ່ເຫມາະສົມເພື່ອຕອບໂຕ້ຕໍ່ແຕ່ລະຂໍ້ກ່າວຫາ. ອົງການແຄຣ໌ອົດສະຕາລີຈະຕັດສິນໃຈເມື່ອການສືບສວນສໍາເລັດ.

ໃນບາງກໍລະນີ, ການສືບສວນພາຍນອກອາດຈະຖືກມອບຫມາຍ ຕາມການຕັດສິນໃຈຂອງຜູ້ອໍານວຍການພະແນກຍຸດທະສາດ ແລະ ການບໍລິການຂອງອົງການແຄຣ໌ອົດສະຕາລີ ແລະ ຜູ້ອໍານວຍການປະຈໍາປະເທດ. ນີ້ຈະອີງໃສ່ປັດໃຈຕ່າງໆເຊັ່ນ: ຄວາມຮຸນແຮງ ຫຼື ຄວາມສັບຊ້ອນຂອງຂໍ້ກ່າວຫາ, ຄວາມພ້ອມຂອງພະນັກງານທີ່ມີທັກສະໃນການດໍາເນີນການສືບສວນ ແລະ ຄວາມເປັນໄປໄດ້ທີ່ຈະດໍາເນີນທາງກົດຫມາຍ.

**4.9.4 ບັນທຶກການສອບສວນ**

ອີງຕາມຂໍ້ມູນທີ່ເກັບກໍາແມ່ນເປັນສ່ວນຫນຶ່ງຂອງການສືບສວນ, ຜູ້ສືບສວນຈະກະກຽມບົດລາຍງານທີ່ກວມລວມເຖິງສິ່ງທີ່ພົບເຫັນຂອງຕົນ ຈົນເຖິງຫຼັກຖານເອກະສານສະຫນັບສະຫນູນຕ່າງໆທີ່ໄດ້ຄົ້ນພົບມາກ່ອນ. ຂໍ້ມູນທີ່ເກັບກໍາເປັນສ່ວນຫນຶ່ງຂອງການສືບສວນຄວນຈະຖືກຄັດຕິດໃສ່ບົດລາຍງານການສືບສວນ ແລະ ເກັບໄວ້ໃນສະຖານທີ່ທີ່ເຫມາະສົມເພື່ອຮັກສາຄວາມລັບ.

**4.9.5 ການລາຍງານສິ່ງທີ່ພົບເຫັນ**

ພາຍຫຼັງສໍາເລັດການສືບສວນ ແລະ ການກະກຽມບົດລາຍງານແລ້ວ, ຜູ້ອໍານວຍການພະແນກຍຸດທະສາດ ແລະ ການບໍລິການຂອງອົງການແຄຣ໌ອົດສະຕາລີ ແລະ ຜູ້ອໍານວຍການປະຈໍາປະເທດຈະຕັດສິນຂໍ້ກ່າວຫາຄົນຂອງແຄຣ໌ວ່າ ຂໍ້ກ່າວຫາດັ່ງກ່າວໄດ້ຮັບການພິສູດບໍ ຫຼື ບໍ່ມີຫຼັກຖານໃນການພິສູດ. ຖ້າເລື່ອງດັ່ງກ່າວໄດ້ຮັບການພິສູດ, ເຂົາເຈົ້າ ຫຼື ຕົວແທນຂອງເຂົາເຈົ້າຈະຊີ້ແຈງການລົງໂທດທາງວິໄນ

[1] Consideration needs to be given how the local authorities will treat the alleged perpetrator (e.g. torture, death penalty, corrupt justice systems) as well as the child (e.g. will the child be victimised, criminalised or forced to undergo medical checks).

ໂດຍສາຍງານທີ່ກ່ຽວຂ້ອງ ແລະ ການຈັດຕັ້ງຄຸ້ມຄອງທີ່ຮັບຜິດຊອບຄົນຂອງແຄຣ໌. ການລົງໂທດທາງວິໄນນີ້ອາດລວມເຖິງການລົງໂທດຕ່າງໆ ຈົນຮອດ ແລະ ລວມເຖິງການຢຸດສັນຍາຈ້າງງານ ໂດຍອີງໃສ່ຄວາມຮ້າຍແຮງຂອງການລະເມີດ.

**4.9.6 ການແກ້ແຄ້ນ**

ຄົນຂອງແຄຣ໌ຈະບໍ່ຍອມຮັບຕໍ່ທຸກຮູບແບບຂອງການບີບບັງຄັບ,ການຂົ່ມຂູ່, ການແກ້ແຄ້ນ ຫຼື ການຕອບໂຕ້ຕໍ່ບຸກຄົນຜູ້ທີ່ລາຍງານບໍ່ວ່າ ຈະກ່ຽວກັບການລ່ວງລະເມີດໃນທຸກຮູບແບບ ຫຼື ການຫາຜົນປະໂຫຍດ, ໃນການສະໜອງຂໍ້ມູນ ຫຼື ການຊ່ວຍເຫຼືອອື່ນໆໃນຂະບວນການການສືບສວນ ທີ່ໄດ້ລະບຸໄວ້ໃນນະໂຍບາຍການລາຍງານຂອງອົງການແຄຣ໌ ອິດສະຕາລີ.

# 5. ນະໂຍບາຍ ແລະ ຂັ້ນຕອນທີ່ກ່ຽວຂ້ອງ ກົດລະບຽບການປ້ອງກັນເດັກ (ເອກະສານຊ້ອນທ້າຍ 2)

- ນະໂຍບາຍການປົກປ້ອງ ອົງການແຄຣ໌ນານາຊາດ (2020)
- ປຶ້ມຄູ່ມືນະໂຍບາຍບຸກຄະລາກອນ ອົງການແຄຣ໌ ອິດສະຕາລີ
- ນະໂຍບາຍດ້ານສຸຂະພາບ ແລະຄວາມປອດໄພ ອົງການແຄຣ໌ ອິດສະຕາລີ
- ນະໂຍບາຍການປ້ອງກັນການລ່ວງລະເມີດ ແລະ ການຈຳແນກ ອົງການແຄຣ໌ ອິດສະຕາລີ
- ນະໂຍບາຍການລາຍງານຂອງອົງການແຄຣ໌ ອິດສະຕາລີ
- ນະໂຍບາຍ ກ່ຽວກັບການສໍ້ໂກງ ແລະ ສໍ້ລາດບັງຫຼວງ ອົງການແຄຣ໌ນານາຊາດ
- ນະໂຍບາຍການຄຸ້ມຄອງຄວາມສ່ຽງ ອົງການແຄຣ໌ ອິດສະຕາລີ
- ພິທີການສືບສວນການກະທຳຜິດກົດລະບຽບຂອງ ອົງການແຄຣ໌ ອິດສະຕາລີ
- ຂໍ້ແນະນຳກ່ຽວກັບການປ້ອງກັນເດັກຂອງ ອົງການແຄຣ໌ ອິດສະຕາລີ – ການເປັນຄູ່ຮ່ວມງານກັບອົງການຈັດຕັ້ງອື່ນໆ (ເດືອນທັນວາ 2020)
- ຂໍ້ແນະນຳການປ້ອງກັນເດັກ ອົງການແຄຣ໌ ອິດສະຕາລີ – ການມີສ່ວນຮ່ວມກັບການບໍລິການພາຍນອກ (ມີນາ 2020)
- ຂໍ້ແນະນຳການປ້ອງກັນເດັກ ອົງການແຄຣ໌ ອິດສະຕາລີ – ການຮັບສະໝັກ ແລະ ການຄັດເລືອກ (ທັນວາ 2020)
- ການລາຍງານຄວາມກັງວົນ ເລື່ອງການລວນລາມທາງເພດ, ການຫາຜົນປະໂຫຍດທາງເພດ, ການລ່ວງລະເມີດທາງເພດ ແລະການປ້ອງກັນເດັກ
- ຂັ້ນຕອນການລາຍງານ ແລະ ການສືບສວນຂອງ ອົງການແຄຣ໌ ອິດສະຕາລີ – ການລວນລາມທາງເພດ, ການຫາຜົນປະໂຫຍດທາງເພດ, ການລ່ວງລະເມີດທາງເພດ ແລະການປ້ອງກັນເດັກ (ເດືອນພະຈິກ 2021)
- ນະໂຍບາຍການຮ້ອງຮຽນ ອົງການແຄຣ໌ ອິດສະຕາລີ

# 6. ເອກະສານສະໜັບສະໜູນ ແລະ ເອກະສານອ້າງອີງ

## 6.1 ນິຕິກຳ

- ກົດໝາຍຕ້ານການຈຳແນກສາມັນຊົນ
- ກົດໝາຍວ່າດ້ວຍວຽກງານຍຸດຕິທຳ
- ກົດບັດຍັດສິດທິມະນຸດ
- ກົດໝາຍວ່າດ້ວຍສຸຂະພາບ ແລະຄວາມປອດໄພໃນບ່ອນເຮັດວຽກ
- ກົດໝາຍວ່າດ້ວຍສຸຂະພາບ ແລະຄວາມປອດໄພຂອງອາຊີບ
- ກົດໝາຍວ່າດ້ວຍກົດໝາຍອາຍາຂອງສາກົນ

- ກົດໝາຍວ່າດ້ວຍອາຊະຍາກຳ (Vic) [ລວມທັງ: ການຂົ່ມເຫັງ, ການດູຖູກ, ການສະກົດຮອຍຕິດຕາມເດັກ, ການຂົ່ມຂືນ, ການກະທຳຜິດທາງເພດ, ຄວາມຮຸນແຮງໃນຄອບຄົວ, ຮູບພາບລາມົກຂອງເດັກ]
- ກົດໝາຍວ່າດ້ວຍຄວາມຮຸນແຮງສ່ວນຕົວ (ACT) [ການສະກົດຮອຍຕາມ, ຄວາມຮຸນແຮງໃນຄອບຄົວ]
- ກົດໝາຍວ່າດ້ວຍອາຊະຍາກຳ (ACT) [ລວມທັງ: ການດູຖູກ, ການສະກົດຮອຍຕາມ, ການກະທຳຜິດທາງເພດ, ຮູບພາບລາມົກ]
- ກົດລະບຽບກ່ຽວກັບອາຊະຍາກຳ (ອຸປະກອນການລ່ວງລະເມີດເດັກ)
- ກົດລະບຽບກ່ຽວກັບອາຊະຍາກຳ (ພາບລາມົກເດັກ)
- ກົດລະບຽບກ່ຽວກັບອາຊະຍາກຳ (ຄວາມຜິດນອກອານາເຂດ)

### 6.2 ເອກະສານ ອົງການແຄຣ໌ ອົດສະຕາລີ ແລະ ອົງການແຄຣ໌ ນານາຊາດ

- ກົດລະບຽບ ແລະ ຫຼັກຈັນຍາບັນຂອງອົງການແຄຣ໌ ອົດສະຕາລີ
- ນະໂຍບາຍການປົກປ້ອງອົງການແຄຣ໌ ນານາຊາດ
- ນະໂຍບາຍການລາຍງານຂອງອົງການແຄຣ໌ ອົດສະຕາລີ

### 6.3 ເອກະສານຊ້ອນທ້າຍ

1. ຂໍ້ກຳນົດການປ້ອງກັນເດັກສຳລັບຄົນຂອງແຄຣ໌
2. ກົດລະບຽບການປ້ອງກັນເດັກ
3. ການຮັບຮູ້ກົດລະບຽບການປະພຶດເພື່ອການປ້ອງກັນເດັກ

## 7. ເຈົ້າຂອງນະໂຍບາຍ

ອຳນວຍການອົງການແຄຣ໌ອົດສະຕາລີ, ໃນນາມຄະນະກຳມະການອົງການແຄຣ໌ ອົດສະຕາລີ

## 8. ການຈັດຕັ້ງປະຕິບັດ ແລະ ການສື່ສານ

ນະໂຍບາຍນີ້ຈະຖືກສື່ສານເຜີຍແຜ່ໃນເວທີການຈັດຕັ້ງຂອງອົງການແຄຣ໌. ລວມທັງສື່ສານເຜີຍແຜ່ສູ່ພາຍນອກຜ່ານເວັບໄຊທ໌ຂອງອົງການແຄຣ໌ອົດສະຕາລີ ແລະ ຂອງຄູ່ຮ່ວມງານຂອງແຄຣ໌.

ຄົນຂອງແຄຣ໌ ແລະ ຄູ່ຮ່ວມງານທັງໝົດ ຈະໄດ້ຮັບສຳເນົາຂອງນະໂຍບາຍນີ້ (ຫຼື ເຂົ້າເຖິງໄດ້) ແລະ ຈະຕ້ອງຕົກລົງເຫັນດີ ແລະ ເຊັນຮັບຮູ້ກົດລະບຽບເຫລົ່ານັ້ນ.

## 9. ລາຍລະອຽດນະໂຍບາຍ

**10.** ວັນທີຂອງນະໂຍບາຍ : ກໍລະກົດ 2022

**11.** ປະຫວັດສະບັບຂອງນະໂຍບາຍ: ສະບັບທີ່ 1 (ສະບັບປັບປຸງຂອງນະໂຍບາຍການປ້ອງກັນເດັກ 2021–2022)

**12.** ກຳນົດເວລາສຳລັບການທົບທວນຄືນນະໂຍບາຍ: ອົງການແຄຣ໌ອົດສະຕາລີຈະທົບທວນນະໂຍບາຍນີ້ທຸກໆ 3 ປີ ຫຼື ໄວກວ່ານັ້ນຖ້າໄດ້ຮັບການຮັບຮອງເຊັ່ນ: ການປ່ຽນແປງທາງດ້ານນິຕິບັນຍັດ, ການປ່ຽນແປງສະພາບການ ຫຼື ການປັບປຸງຢ່າງຕໍ່ເນື່ອງທີ່ເກີດຂື້ນຈາກການຄຸ້ມຄອງເຫດການ ແລະ ການຕິດຕາມ. ນະໂຍບາຍນີ້ຕ້ອງໄດ້ຮັບການອະນຸມັດຈາກຄະນະກຳມະການ.

## 13. ນິຍາມ

ເດັກນ້ອຍແມ່ນບຸກຄົນທີ່ມີອາຍຸຕໍ່າກ່ວາ 18 ປີ.

ການລ່ວງລະເມີດເດັກແມ່ນການລ່ວງລະເມີດທີ່ສົ່ງຜົນໃຫ້ເກີດອັນຕະລາຍຕໍ່ສຸຂະພາບ, ການພັດທະນາ, ຫຼື ກຽດສັກສີຂອງເດັກໃນສະພາບການຈາກຄວາມສຳພັນທີ່ມາຈາກຄວາມຮັບຜິດຊອບ, ຄວາມໄວ້ວາງໃຈ ຫຼືອຳນາດ. ສິ່ງນີ້ລວມເຖິງການລ່ວງລະເມີດທາງຮ່າງກາຍ, ການປ່ອຍປະລະເລີຍ, ການລ່ວງລະເມີດທາງອາລົມ, ການລ່ວງລະເມີດທາງເພດ ຫຼື ການປະພຶດທີ່ເຮັດໃຫ້ເກີດມີຄວາມເຈັບປ່ວຍ. ການລ່ວງລະເມີດອາດຈະຖືກກະທຳໂດຍຜູ້ໃຫຍ່, ຄົນໜຸ່ມ ຫຼື ເດັກນ້ອຍຄົນອື່ນ.

**ການຫາຜົນປະໂຫຍດກັບເດັກ** (ກ່ຽວຂ້ອງກັບຂໍ້ໃດຂໍ້ໜຶ່ງໃນຕໍ່ໄປນີ້):
● ການກະທຳ ຫຼື ສະແດງກິລິຍາຕໍ່ເດັກໂດຍການລ່ວງລະເມີດຕໍ່ເດັກ, ຫຼື ຕົວະຍົວະເດັກ.
● ຂົ່ມຂູ່ບຸກຄົນອື່ນໃຫ້ກະທຳການ ຫຼື ລ່ວງລະເມີດຕໍ່ເດັກ, ຫຼື ການຕົວະຍົວະເດັກ.
● ຄອບຄອງ, ຄວບຄຸມ, ຜະລິດ, ແຈກຢາຍ, ຮັບ ຫຼື ສົ່ງອຸປະກອນເພື່ອຫາຜົນປະໂຫຍດກັບເດັກ.

**ການໃຊ້ແຮງງານເດັກ** ແມ່ນວຽກງານທີ່ຂັດຂວາງເດັກນ້ອຍໃນໄວເດັກ, ທ່າແຮງ ແລະ ກຽດສັກສີຂອງພວກເຂົາ, ແລະ ເປັນອັນຕະລາຍຕໍ່ການພັດທະນາທາງດ້ານຮ່າງກາຍ ແລະ ຈິດໃຈ ຊຶ່ງຫມາຍເຖິງການເຮັດວຽກດັ່ງລຸ່ມນີ້:

● ເປັນອັນຕະລາຍທາງດ້ານຈິດໃຈ, ທາງດ້ານຮ່າງກາຍ, ສັງຄົມ ຫຼື ທາງສິນທຳ ແລະ ເປັນອັນຕະລາຍຕໍ່ເດັກນ້ອຍ; ແລະ/ຫຼື

● ຂັດຂວາງການຮຽນຂອງເຂົາເຈົ້າໂດຍ: ຂາດໂອກາດເຂົ້າໂຮງຮຽນ; ບັງຄັບໃຫ້ພວກເຂົາອອກຈາກໂຮງຮຽນກ່ອນໄວອັນຄວນ; ຫຼື ຮຽກຮ້ອງໃຫ້ພວກເຂົາພະຍາຍາມທັງເຂົ້າໂຮງຮຽນທັງເຮັດວຽກທີ່ຍາວນານ ແລະ ໜັກເກີນໄປ.

**ການລ່ວງລະເມີດທາງເພດເດັກ**ແມ່ນຮູບແບບຂອງກິດຈະກຳທາງເພດກັບເດັກ. ຈະເຫັນໄດ້ຈາກກິດຈະກຳລະຫວ່າງເດັກນ້ອຍກັບຜູ້ໃຫຍ່ ຫຼື ເດັກນ້ອຍຄົນອື່ນທີ່ມີອາຍຸ ຫຼື ການພັດທະນາຢູ່ໃນຄວາມສຳພັນຂອງຄວາມຮັບຜິດຊອບ, ຄວາມໄວ້ວາງໃຈ ຫຼື ອຳນາດ, ກິດຈະກຳທີ່ມີຈຸດປະສົງເພື່ອຄວາມພໍໃຈ ຫຼື ສະໜອງຄວາມຕ້ອງການຂອງຄົນອື່ນ.

ຊຶ່ງອາດປະກອບມີ, ແຕ່ບໍ່ຈຳກັດພຽງ, ກິດຈະກຳການຕິດຕໍ່ ຫຼືບໍ່ໄດ້ຕິດຕໍ່, ການຊັກຊວນ ຫຼື ບັງຄັບໃຫ້ເດັກເຂົ້າຮ່ວມກິດຈະກຳທາງເພດໃດໆ, ການໃຊ້ເດັກນ້ອຍໃນການຄ້າປະເວນີ ຫຼື ການປະຕິບັດທາງເພດອື່ນໆ, ຫຼື ການເປີດເຜີຍໃຫ້ເດັກມີເພດສຳພັນທາງອອນລາຍ, ຫາຜົນປະໂຫຍດກັບເດັກໂດຍໃຫ້ເດັກໃຊ້ອຸປະກອນລາມົກ, ຫຼື ການຫາຜົນປະໂຫຍດຈາກການເອົາຮູບທາງເພດຂອງເດັກນ້ອຍ.

**ການຫາຜົນປະໂຫຍດທາງເພດຈາກເດັກ** ແມ່ນການກະທຳ ຫຼື ຄວາມພະຍາຍາມລ່ວງລະເມີດຈາກຄວາມອ່ອນແອ, ອຳນາດທີ່ແຕກຕ່າງ ຫຼື ຄວາມເຊື່ອຖື, ເພື່ອຈຸດປະສົງທາງເພດ. ການກະທຳອາດຈະກ່ຽວຂ້ອງກັບການຄອບຄອງ, ຄວບຄຸມ, ການຜະລິດ, ການແຈກຢາຍ, ການຮັບ ຫຼື ສົ່ງອຸປະກອນການຫາຜົນປະໂຫຍດກັບເດັກ, ລວມທັງຮູບລາມົກເດັກ, ຫຼື ການຈ້າງງານ, ການຂົນສົ່ງ ຫຼື ການຮັບເດັກນ້ອຍເພື່ອຈຸດປະສົງຂອງການຫາຜົນປະໂຫຍດ, ໂດຍວິທີການຂົ່ມຂູ່, ການບັງຄັບ ຫຼື ການບີບບັງຄັບໃນຮູບແບບອື່ນໆ. ຜູ້ທີ່ມີສ່ວນຮ່ວມໃນການຫາຜົນປະໂຫຍດທາງເພດກັບເດັກອາດຈະຊອກຫາຜົນກຳໄລທາງດ້ານການເງິນ, ທາງດ້ານສັງຄົມ ຫຼື ທາງການເມືອງຈາກການຫາຜົນປະໂຫຍດທາງເພດ.

**ການຕິດຕໍ່ກັບເດັກນ້ອຍ** ຫມາຍເຖິງບົດບາດ ຫຼື ກິດຈະກຳທີ່ມີສ່ວນຮ່ວມ ຫຼື ອາດຈະກ່ຽວຂ້ອງກັບການຕິດຕໍ່ໂດຍກົງກັບເດັກນ້ອຍ, ພາຍໃຕ້ໜ້າວຽກຂອງຕຳແຫນ່ງ ຫຼື ຍ້ອນລັກສະນະຂອງສະພາບແວດລ້ອມໃນການເຮັດວຽກ, ຫຼື ການເຂົ້າເຖິງ ແລະ ການຈັດການຂໍ້ມູນຂອງເດັກນ້ອຍ. ຫົວໜ້າສາຍງານ ຮ່ວມກັບ ຜູ້ປະສານງານວຽກງານການປົກປ້ອງຕ້ອງມີຄວາມຮັບຜິດຊອບໃນການກຳນົດວ່າຕຳແຫນ່ງດັ່ງກ່າວມີການພົວພັນກັບເດັກນ້ອຍຫຼືບໍ່.

**ການລ່ວງລະເມີດທາງອາລົມ** ແມ່ນການກະທຳທາງວາຈາ ຫຼື ທ່າທີທີ່ບໍ່ເໝາະສົມຂອງພໍ່ແມ່ ຫຼື ຜູ້ເບິ່ງແຍງເດັກ ຫຼື ຮູບແບບຂອງການສະໜອງການລ້ຽງດູທີ່ບໍ່ພຽງພໍຕໍ່ຮ່າງກາຍ ແລະ ອາລົມຂອງເດັກ. ການກະທຳດັ່ງກ່າວມີຄວາມເປັນໄປໄດ້ສູງທີ່ຈະທຳລາຍຄວາມພາກພູມໃຈໃນຕົນເອງ, ສຸຂະພາບຈິດ ຫຼື ຄວາມສາມາດທາງດ້ານສັງຄົມຂອງເດັກ.

**ການຕົວະຍົວະ** ໝາຍເຖິງພຶດຕິກຳທີ່ຊ່ວຍໃຫ້ບຸກຄົນໜຶ່ງມີສ່ວນຮ່ວມໃນການລ່ວງລະເມີດທາງເພດ, ການຫາຜົນປະໂຫຍດທາງເພດ ຫຼື ການລ່ວງລະເມີດຜູ້ອື່ນໄດ້ງ່າຍຂຶ້ນ. ຊຶ່ງກ່ຽວຂ້ອງກັບການນຳໃຊ້ເຕັກນິກ ແລະ ການຄວບຄຸມທີ່ຫລາກຫລາຍກັບຜູ້ທີ່ມີຄວາມດ້ອຍ, ຄົນອ້ອມຂ້າງ ແລະ ສິ່ງແວດລ້ອມ, ເພື່ອສ້າງຄວາມໄວ້ວາງໃຈ ຫຼື ເຮັດໃຫ້ພຶດຕິກຳທີ່ເປັນອັນຕະລາຍທາງເພດເປັນເລື່ອງປົກກະຕິ, ໂດຍມີຈຸດປະສົງເພື່ອອຳນວຍຄວາມສະດວກໃນການຫາຜົນປະໂຫຍດ ແລະ/ຫຼື ຫ້າມການເປີດເຜີຍ ຫຼື ສະຫນອງວິທີການດ້ອຍເຫດຜົນຕ່າງໆ ຫຼື ເພື່ອປະຕິເສດການກະທຳຂອງຕົນເອງ. ມີວິທີການທີ່ຫຼາກຫຼາຍຜ່ານເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ການສື່ສານທີ່ອາດຈະຖືກນຳໃຊ້ເຂົ້າໃນພຶດຕິກຳການຕົວະຍົວະ.

ການປະຕິບັດທີ່ບໍ່ດີໝາຍເຖິງການສັ່ງສອນ ຫຼື ການແກ້ໄຂບັນຫາຂອງເດັກໃນລັກສະນະທີ່ບໍ່ສົມເຫດສົມຜົນ ແລະ ບໍ່ເຫມາະສົມຢ່າງຮຸນແຮງ ຫຼື ບໍ່ຖືກຕ້ອງ; ຊຶ່ງເຮັດໃຫ້ເດັກ ຮຽກຮ້ອງຫຼາຍເກີນໄປ ແລະ/ຫຼື ເຮັດໃຫ້ເດັກເສື່ອມເສຍ; ການໃຊ້ກຳລັງເປັນສິ່ງທີ່ບໍ່ຄວນກະທຳຕໍ່ເດັກ; ແລະ/ຫຼື ຮູບແບບຂອງການໃຫ້ຄຳຄິດເຫັນ ຫຼື ພຶດຕິກຳທີ່ເສື່ອມເສຍ ຫຼື ບໍ່ສົມເຫດສົມຜົນ ແລະ ບໍ່ເໝາະສົມຢ່າງຮ້າຍແຮງຕໍ່ເດັກ.

**ການປ່ອຍປະລະເລີຍ**ແມ່ນຄວາມລົ້ມເຫຼວຂອງພໍ່ແມ່ ຫຼື ຜູ້ເບິ່ງແຍງເດັກໃນການສະໜອງໃຫ້ກັບເດັກ (ສິ່ງທີ່ພວກເຂົາຄວນຈະໄດ້ຮັບ) ດ້ວຍເງື່ອນໄຂທີ່ຍອມຮັບທາງດ້ານວັດທະນະທຳ ຊຶ່ງເປັນສິ່ງທີ່ຈຳເປັນສຳລັບການພັດທະນາທາງດ້ານຮ່າງກາຍ ແລະ ຈິດໃຈ ແລະ ຄວາມເປັນຢູ່ທີ່ດີຂອງເດັກ.

**ການລ່ວງລະເມີດທາງກາຍ** ໝາຍເຖິງການທຳຮ້າຍຮ່າງກາຍທີ່ບໍ່ບັງເອີນ, ການຂົ່ມຂູ່ ຫຼື ຄວາມສ່ຽງຕໍ່ການທຳຮ້າຍຮ່າງກາຍ, ຕໍ່ເດັກນ້ອຍໂດຍຜູ້ໃຫຍ່. ການລ່ວງລະເມີດທາງກາຍອາດມີເຈດຕະນາ ຫຼື ອາດເປັນຜົນມາຈາກການລົງໂທດທາງຮ່າງກາຍໂດຍບໍ່ໄດ້ຕັ້ງໃຈ ຫຼື ມີລະບຽບວິໄນຫຼາຍເກີນໄປ.

ສາມາດເປັນການກະທຳດຽວ ຫຼື ການກະທຳຊ້ຳໆ, ແລະ ຈະບໍ່ປ່ອຍໃຫ້ເຫັນຮ່ອງຮອຍ ຫຼື ການບາດເຈັບທີ່ເຫັນໄດ້.

**ການພິສູດ** ໝາຍຄວາມວ່າຫຼັງຈາກການສືບສວນ, ຂໍ້ກ່າວຫາ ມີແນວໂນ້ມວ່າໄດ້ເກີດຂຶ້ນ,ໂດຍມີຫຼັກຖານພິສູດ.

**ບໍ່ໄດ້ຮັບການພິສູດ** ໝາຍຄວາມວ່າຫຼັງຈາກການສືບສວນ, ຂໍ້ກ່າວຫາ ມີແນວໂນ້ມວ່າບໍ່ໄດ້ຮັບການພິສູດໂດຍຫຼັກຖານ.

**ການເຮັດວຽກກັບເດັກນ້ອຍ** ໝາຍເຖິງການມີສ່ວນຮ່ວມໃນກິດຈະກຳກັບເດັກ ຊຶ່ງການຕິດຕໍ່ພົວພັນຄາດວ່າຈະເປັນເລື່ອງປົກກະຕິຂອງກິດຈະກຳ ແລະ ການຕິດຕໍ່ນັ້ນບໍ່ໄດ້ເກີດຂຶ້ນໂດຍບັງເອີນ. ການເຮັດວຽກລວມທັງການເປັນອາສາສະໝັກ ແລະ ວຽກງານອື່ນໆທີ່ບໍ່ໄດ້ຮັບຄ່າຈ້າງ.

# ເອກະສານຊ້ອນທ້າຍ 1

## ຄວາມຈຳເປັນໃນວຽກງານການປ້ອງກັນເດັກ

ຂະບວນການຄຸ້ມຄອງຄວາມສ່ຽງລະດັບໂຄງການຕ້ອງລວມເອົາການປະເມີນການປົກປ້ອງ ແລະ ການປ້ອງກັນເດັກ, ແລະ ສິ່ງຕໍ່ໄປນີ້ຕ້ອງຖືກຈັດຕັ້ງປະຕິບັດ (ການປັບຕົວເຂົ້າກັບສະພາບທ້ອງຖິ່ນໂດຍການຮ່ວມມືກັບພາກສ່ວນກ່ຽວຂ້ອງທ້ອງຖິ່ນຕາມຄວາມເໝາະສົມ):

- ນະໂຍບາຍການປ້ອງກັນເດັກຮັບຮອງເອົາ ຫຼື ສອດຄ່ອງກັບມາດຕະຖານຂອງອົງການແຄຣ໌ອົດສະຕາລີທີ່ກຳນົດໄວ້ໃນນະໂຍບາຍການປົກປ້ອງເດັກຂອງອົງການແຄຣ໌ອົດສະຕາລີ.
- ຂະບວນການຮັບສະໝັກພະນັກງານ ແລະ ການກວດກາທີ່ປອດໄພສຳລັບເດັກ, ລວມທັງການກວດປະຫວັດຄະດີອາຍາທີ່ສອດຄ່ອງກັບມາດຕະຖານຂອງອົງການແຄຣ໌ອົດສະຕາລີ ທີ່ໄດ້ກຳນົດໄວ້ໃນນະໂຍບາຍການປ້ອງກັນເດັກຂອງ ອົງການແຄຣ໌ອົດສະຕາລີກ່ອນການເຂົ້າເຮັດວຽກ, ຄຳຖາມສຳພາດກຸ່ມເປົ້າໝາຍ ແລະ ການກວດກາຜູ້ອ້າງອີງທາງວາຈາ, ສຳລັບບຸກຄະລາກອນທັງໝົດ (ລວມທັງອາສາສະໝັກ ແລະ ນັກຮຽນຝຶກງານ) ຜູ້ທີ່ຈະເຮັດວຽກກັບເດັກນ້ອຍ.
- ກົນໄກການຕຳນິຕິຊົມໃນລະດັບຊຸມຊົນທີ່ເໝາະສົມກັບສະພາບການທ້ອງຖິ່ນ ແລະ ສາມາດເຂົ້າເຖິງຜູ້ເຂົ້າຮ່ວມໂຄງການທັງຫມົດ.
- ຂັ້ນຕອນການຄຸ້ມຄອງການຮ້ອງທຸກກ່ຽວກັບການປ້ອງກັນເດັກໄດ້ມີການບັນທຶກ.
- ຈັດຝຶກອົບຮົມການປ້ອງກັນເດັກຢ່າງເປັນປົກກະຕິໃຫ້ແກ່ບຸກຄະລາກອນທີ່ກ່ຽວຂ້ອງ.
- ຫຼັກຈັນຍາບັນຂອງການປ້ອງກັນເດັກຕ້ອງຮັບຮູ້ ແລະ ລົງລາຍເຊັນໂດຍບຸກຄະລາກອນທັງໝົດ (ຄົນຂອງແຄຣ໌ ແລະ ຄູ່ຮ່ວມງານ) ແລະ ແຂກມາຢ້ຽມຢາມ.
- ທຸກຂໍ້ກຳນົດໃນສັນຍາ, ອົງການມີສິດໃນການໂຈະສັນຍາ (ໂດຍມີ ຫຼື ບໍ່ມີຄ່າຈ້າງງານ) ຫຼື ຖ້າພະນັກງານຫາກຢູ່ພາຍໃຕ້ການກວດສອບກ່ຽວກັບການລະເມີດນະໂຍບາຍການປ້ອງກັນເດັກ ຫຼື ກົດລະບຽບການປົກປ້ອງເດັກ, ອົງການສາມາດໂອນພະນັກງານໄປເຮັດວຽກອື່ນ ແລະ ຖ້າຫາກພົບເຫັນວ່າພະນັກງານໄດ້ມີການລະເມີດນະໂຍບາຍການປ້ອງກັນເດັກ ຫຼື ກົດລະບຽບການປົກປ້ອງເດັກ ຂໍ້ກຳນົດການລົງໂທດທາງວິໄນແມ່ນຈະຖືກດຳເນີນຈົນຂັ້ນຍົກເລີກສັນຍາການວ່າຈ້າງ.
- ການປະຕິບັດຕາມນະໂຍບາຍ ລວມທັງການລົງໂທດໃນການລະເມີດກົດລະບຽບແມ່ນມີການບັນທຶກ.
- ຖ້າບຸກຄະລາກອນຄົນໃດຄົນໜຶ່ງຖືກກ່າວຫາວ່າໄດ້ກະທຳ, ຫຼື ຖືກຈັບ, ຫຼື ຖືກຕັດສິນລົງໂທດ, ການກະທຳຜິດທາງອາຍາທີ່ກ່ຽວຂ້ອງກັບການລ່ວງລະເມີດເດັກ ຫຼື ຮູບພາບລາມົກອານາຈານເດັກ ແມ່ນຕ້ອງຖືກລາຍງານເປັນລາຍລັກອັກສອນໃຫ້ກັບຜູ້ອຳນວຍການພະແນກຍຸດທະສາດ ແລະ ການບໍລິການຂອງອົງການແຄຣ໌ອົດສະຕາລີ ທັນທີ.

# ເອກະສານຊ້ອນທ້າຍ 2

# ຫຼັກຈັນຍາບັນເພື່ອການປ້ອງກັນເດັກ

ການລ່ວງລະເມີດເດັກ ແລະ ການຫາຜົນປະໂຫຍດເດັກແມ່ນບໍ່ສາມາດຍອມຮັບໄດ້ ແລະ ຄົນຂອງແຄຣ໌ ແລະ ຄູ່ຮ່ວມງານ ມີຄວາມມຸ່ງໝັ້ນທີ່ຈະປະຕິບັດຕາມ, ຍຶດໝັ້ນ ແລະ ສົ່ງເສີມມາດຕະຖານ ການປ້ອງກັນເດັກທີ່ເໝາະສົມຕະຫຼອດເວລາ ອີງຕາມລະດັບຄວາມສ່ຽງ. ຄົນຂອງແຄຣ໌ ຈະໃຫ້ຄໍາແນະນໍາສໍາລັບຄົນຂອງແຄຣ໌, ຄູ່ຮ່ວມງານ ແລະ ແຂກຜູ້ມາຢ້ຽມຢາມເພື່ອໃຫ້ໄດ້ມາດຕະຖານເຫຼົ່ານີ້. ທຸກໆກໍລະນີທີ່ຖືກກ່າວຫາວ່າມີການລ່ວງລະເມີດ ຫຼື ການຫາຜົນປະໂຫຍດຈະຖືກລາຍງານ, ສືບສວນ ແລະ ດໍາເນີນການທີ່ເຫມາະສົມທັນທີ.

ຄວາມສາມາດຂອງອົງການແຄຣ໌ອິດສະຕາລີ ໃນການຮັບປະກັນການປ້ອງກັນ ແລະ ການຊ່ວຍເຫຼືອເດັກນ້ອຍທີ່ພວກເຮົາເຮັດວຽກນໍາ, ແມ່ນຂຶ້ນກັບຄວາມສາມາດຂອງ ຄົນຂອງແຄຣ໌ ແລະ ຄູ່ຮ່ວມງານທີ່ຈະຮັກສາ ແລະ ສົ່ງເສີມມາດຕະຖານສູງສຸດຂອງຫຼັກຈັນຍາບັນ ແລະ ການປະພຶດທີ່ເປັນມືອາຊີບ. ຄົນຂອງແຄຣ໌ ແລະ ຄູ່ຮ່ວມງານແມ່ນມີຄວາມຮັບຜິດຊອບຕໍ່ຕົນເອງ ແລະ ຮັບຜິດຊອບຕໍ່ສ່ວນລວມ ແລະ ມຸ່ງຫມັ້ນທີ່ຈະປະຕິບັດຕາມ, ຍຶດໝັ້ນ ແລະ ສົ່ງເສີມມາດຕະຖານ ການປ້ອງກັນເດັກທີ່ເຫມາະສົມຕະຫຼອດເວລາ. ຫົວໜ້າທຸກຄົນມີຄວາມຮັບຜິດຊອບສະເພາະທີ່ຕ້ອງຍຶດຫມັ້ນມາດຕະຖານເຫຼົ່ານີ້, ເປັນຕົວຢ່າງທີ່ດີ, ແລະ ສ້າງສະພາບແວດລ້ອມການເຮັດວຽກທີ່ສະຫນັບສະຫນູນ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ ຄົນຂອງແຄຣ໌ ແລະ ຄູ່ຮ່ວມງານ.

ເປັນທີ່ຮັບຮູ້ວ່າວຽກງານຂອງອົງການແຄຣ໌ອິດສະຕາລີ (ແລະ ວຽກງານຂອງຄູ່ຮ່ວມງານ) ມັກຈະເຮັດໃຫ້ພະນັກງານຂອງຕົນຢູ່ໃນຕໍາແຫນ່ງທີ່ໄດ້ຮັບຄວາມໄວ້ວາງໃຈ ຫຼື ມີອໍານາດທີ່ກ່ຽວຂ້ອງກັບເດັກນ້ອຍທີ່ພວກເຮົາເຮັດວຽກນໍາ. ຄົນຂອງແຄຣ໌, ຄູ່ຮ່ວມງານ ແລະ ແຂກຢ້ຽມຢາມມີພັນທະທີ່ບໍ່ສວຍໃຊ້ຄວາມໄວ້ວາງໃຈ ຫຼື ອໍານາດນີ້ໃນການກະທໍາຜິດ.

ຫຼັກຈັນຍາບັນນີ້ມີຈຸດປະສົງເພື່ອໃຊ້ເປັນລະບຽບທີ່ຊັດເຈນ, ເພື່ອໃຫ້ຄົນຂອງແຄຣ໌ ແລະ ຄູ່ຮ່ວມງານສາມາດຕັດສິນໃຈດ້ານຈັນຍາບັນທີ່ເຂົາເຈົ້າຕ້ອງປະຕິບັດໃນການເຮັດວຽກຢ່າງເປັນມືອາຊີບ, ແລະ ໃນຊີວິດສ່ວນຕົວຂອງເຂົາເຈົ້າ.

ໃນຂະນະທີ່ຍອມຮັບວ່າກົດໝາຍ ແລະ ຮີດຄອງປະເພນີທ້ອງຖິ່ນອາດແຕກຕ່າງກັນໄປຈາກປະເທດໜຶ່ງໄປອີກປະເທດໜຶ່ງ, ຫຼັກຈັນຍາບັນເພື່ອການປ້ອງກັນເດັກແມ່ນອີງໃສ່ມາດຕະຖານກົດໝາຍສາກົນ.

ຫຼັກຈັນຍາບັນຂອງການປ້ອງກັນເດັກນໍາໃຊ້ກັບຄົນຂອງແຄຣ໌ ແລະ ຄູ່ຮ່ວມງານ, ຊຶ່ງຕ້ອງໄດ້ເຊັນຮັບຮູ້ ແລະເຂົ້າໃຈຕໍ່ກົດລະບຽບຈັນຍາບັນດັ່ງກ່າວ. ການລະເມີດກົດລະບຽບການປະພຶດໃດໆຈະຖືວ່າເປັນການກະທໍາທີ່ຮ້າຍແຮງ ແລະ ອາດຈະເຮັດໃຫ້ມີການລົງໂທດທາງວິໄນ ຫຼື ການຍົກເລີກສັນຍາ, ອີງຕາມຂັ້ນຕອນທາງວິໄນຂອງອົງການແຄຣ໌ອິດສະຕາລີ.

ຄົນຂອງແຄຣ໌ ແລະ ຄູ່ຮ່ວມງານທຸກຄົນ ມີໜ້າທີ່ຮັບຜິດຊອບໃນການຊຸກຍູ້, ສະໜັບສະໜູນ ແລະ ສົ່ງເສີມການເຜີຍແຜ່ກົດລະບຽບການປະພຶດເພື່ອການປ້ອງກັນເດັກ. ແລະຍັງມີບົດບາດໃນການປະຕິບັດ, ຕິດຕາມ ແລະ ບັງຄັບໃຊ້ມາດຕະຖານ ແລະ ຄວນຊຸກຍູ້ໃຫ້ທຸກຄົນປະຕິບັດຕາມມາດຕະຖານເຫຼົ່ານີ້ ແລະ ຮ່ວມມືກັບອົງການແຄຣ໌ອິດສະຕາລີເພື່ອສະໜັບສະໜູນມາດຕະຖານເຫຼົ່ານີ້.

ໃນຖານະເປັນຄົນຂອງແຄຣ໌ ແລະຫຼື ຄູ່ຮ່ວມງານ, ຂ້າພະເຈົ້າໃຫ້ຄໍາຫມັ້ນສັນຍາທີ່ຈະ:

1. **ປະຕິບັດຕໍ່ເດັກນ້ອຍທຸກຄົນຢ່າງຍຸດຕິທໍາ, ດ້ວຍຄວາມເຄົາລົບ ແລະ ນັບຖືກຽດສັກສີ**
   - 1.1. ຂ້າພະເຈົ້າຈະປະຕິບັດຕໍ່ເດັກດ້ວຍຄວາມເຄົາລົບໂດຍບໍ່ຄໍານຶງເຖິງເຊື້ອຊາດ, ສີຜິວ, ເພດ, ພາສາ, ສາສະໜາ, ລະບອບການເມືອງ ຫຼື ຄວາມເຫັນອື່ນໆທີ່ມີການຈໍາແນກສັນຊາດ, ຊົນເຜົ່າ ຫຼື ຕົ້ນກໍາເນີດທາງສັງຄົມ, ຄວາມພິການ, ການເກີດ ຫຼື ສະຖານະພາບດ້ານອື່ນໆ.
   - 1.2. ຂ້າພະເຈົ້າຈະດູແລ ແລະ ປົກປ້ອງສິດທິຂອງເດັກ ແລະ ປະພຶດຕົນເພື່ອຮັບປະກັນວ່າ ບັນຫາຄວາມເປັນຫວ່ງຕໍ່ເດັກຈະເປັນບັນຫາທີ່ສໍາຄັນທີ່ຕ້ອງໄດ້ຮັບການພິຈາລະນາ.

2. **ສົ່ງເສີມຄວາມເປັນເອກະພາບຂອງອົງການແຄຣ໌ໂດຍການຮັບປະກັນວ່າຂ້າພະເຈົ້າໄດ້ປະຕິບັດຕາມກົດລະບຽບຢ່າງເປັນມືອາຊີບ ແລະ ໃນມາດຕະຖານສູງສຸດ**

2.1. ຂ້າພະເຈົ້າຈະສະແດງຄວາມສັດຊື່ສຸຈະລິດ, ຄວາມຈິງໃຈ, ການທຸ່ມເທ ແລະ ຊື່ສັດໃນການກະທຳຂອງຂ້າພະເຈົ້າ. ຂ້າພະເຈົ້າຈະອົດທົນ, ເຄົາລົບ ແລະ ສຸພາບຮຽບຮ້ອຍຕໍ່ທຸກໆຄົນທີ່ຂ້າພະເຈົ້າເຮັດວຽກນຳ ອີງຕາມຄວາມສາມາດຂອງຂ້າພະເຈົ້າ, ລວມທັງເດັກນ້ອຍ.

2.2. ຂ້າພະເຈົ້າຮັບຮູ້ວ່າ ການປະພຶດສ່ວນຕົວຂອງຂ້າພະເຈົ້າຈະສະທ້ອນເຖິງຊື່ສຽງຂອງອົງການແຄຣ໌ ແລະ ອາດຈະສົ່ງຜົນກະທົບຕໍ່ຄວາມຮັບຮູ້ຂອງຊຸມຊົນ. ສະນັ້ນ, ຂ້າພະເຈົ້າຈະຫຼີກລ່ຽງພຶດຕິກຳທີ່ບໍ່ເໝາະສົມ ຊຶ່ງອາດຈະເປັນການທຳລາຍ ຫລືສ້າງຄວາມເສັຍຫາຍໃຫ້ແກ່ອົງການແຄຣ໌.

2.3. ຂ້າພະເຈົ້າເຂົ້າໃຈວ່າເປັນຄວາມຮັບຜິດຊອບຂອງຂ້າພະເຈົ້າ, ໃນຖານະທີ່ເປັນບຸກຄົນທີ່ກ່ຽວຂ້ອງກັບອົງການແຄ໌ອົດສະຕາລີ, ເພື່ອຫຼີກລ່ຽງການກະທຳ ຫຼື ພຶດຕິກຳທີ່ອາດຕີຄວາມໝາຍໄດ້ວ່າເປັນການຫາຜົນປະໂຫຍດກັບເດັກ ແລະ ການລ່ວງລະເມີດເດັກ.

2.4. ຂ້າພະເຈົ້າຈະຕະໜັກເຖິງພຶດຕິກຳ ແລະ ຫຼີກລ່ຽງການກະທຳ ຫຼື ພຶດຕິກຳທີ່ຄົນອື່ນອາດເບິ່ງວ່າເປັນການຫາຜົນປະໂຫຍດກັບເດັກ ແລະ ການລ່ວງລະເມີດເດັກ.

**3.** ປົກປ້ອງ ແລະ ມີຄວາມຮັບຜິດຊອບໃນການນຳໃຊ້ຂ່າວສານ ແລະ ແຫຼ່ງຂໍ້ມູນ ທີ່ຂ້າພະເຈົ້າສາມາດເຂົ້າເຖິງ ເນື່ອງຈາກວ່າມີສັນຍາກັບອົງການແຄຣ໌ ຫລື ເຮັດວຽກກັບອົງການແຄຣ໌.

3.1. ຂ້າພະເຈົ້າຈະປົກປ້ອງ, ຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນບຸກຄົນ, ການເງິນ ແລະ ອຸປະກອນຂອງອົງການຢ່າງເໝາະສົມ. ຂ້າພະເຈົ້າຈະບໍ່ນຳໃຊ້ຊັບພະຍາກອນຂອງອົງການແຄຣ໌ເພື່ອຫາຜົນປະໂຫຍດ ຫຼື ຂູດຮີດ ຫຼື ຂົ່ມເຫັງເດັກນ້ອຍ ຫຼື ເຂົ້າເຖິງຮູບພາບອານາຈານຂອງເດັກ.

3.2. ເມື່ອຖ່າຍຮູບ ຫຼື ຖ່າຍຮູບເງົາເດັກນ້ອຍ ຫຼື ໃຊ້ຮູບພາບເດັກນ້ອຍເພື່ອຈຸດປະສົງທີ່ກ່ຽວຂ້ອງກັບວຽກ, ຂ້າພະເຈົ້າຕ້ອງ:

- ເອົາໃຈໃສ່ເພື່ອຮັບປະກັນວ່າໄດ້ປະຕິບັດຕາມປະເພນີທ້ອງຖິ່ນ ຫຼື ຂໍ້ຈຳກັດ ໃນການຜະລິດຮູບພາບສ່ວນບຸກຄົນກ່ອນທີ່ຈະຖ່າຍຮູບ ຫຼື ຖ່າຍຮູບເງົາເດັກນ້ອຍ.
- ກ່ອນຈະຖ່າຍຮູບ ຫຼື ແຕ້ມຮູບເດັກ, ຕ້ອງໄດ້ຮັບການຍິນຍອມຈາກເດັກ ແລະ ພໍ່ແມ່ ຫຼື ຜູ້ປົກຄອງເດັກກ່ອນ. ເມື່ອໄດ້ຮັບການຍິນຍອມເຫັນດີ, ຂ້າພະເຈົ້າຕ້ອງອະທິບາຍຈຸດປະສົງການນຳໃຊ້ຮູບ ຫຼື ຮູບເງົານັ້ນໆ.
- ຮັບປະກັນການຖ່າຍຮູບ, ຮູບແຕ້ມ ແລະ ຮູບເງົາຂອງເດັກນ້ອຍຖືກນຳສະເໜີໃນລັກສະນະທີ່ໃຫ້ກຽດ ແລະ ມີຄວາມເຄົາລົບ ແລະ ບໍ່ຢູ່ໃນລັກສະນະທີ່ມີຄວາມສ່ຽງ, ເສຍອຳນາດ ຫຼື ອ່ອນແອ.
- ເດັກນ້ອຍຄວນໄດ້ຮັບການນຸ່ງເສື້ອຜ້າຢ່າງເໝາະສົມ ແລະ ບໍ່ຢູ່ໃນທ່າທີ່ທີ່ອາດເບິ່ງວ່າເປັນການລ່ວງລະເມີດທາງເພດ ຫຼື ຍອມຈຳນົນ.
- ຮັບປະກັນວ່າຮູບພາບເດັກນ້ອຍ ຖືກນຳສະໜີຕາມບໍລິບົດ ແລະ ຄວາມເປັນຈິງ.
- ໃຫ້ແນ່ໃຈວ່າເຄື່ອງໝາຍເອກະສານ, ຂໍ້ມູນ ຫຼື ຄຳອະທິບາຍຂໍ້ຄວາມຕ່າງໆ ບໍ່ເປີດເຜີຍຂໍ້ມູນທີ່ລະບຸຕົວຕົນຂອງເດັກນ້ອຍໃນເວລາສົ່ງຮູບພາບທາງອີເລັກໂທຣນິກ ຫຼື ເຜີຍແຜ່ຮູບພາບໃນຮູບແບບໃດນຶ່ງ.

3.3. ຂ້າພະເຈົ້າຈະປະຕິບັດຢ່າງເໝາະສົມຕໍ່ທຸກບັນຫາທີ່ກ່ຽວກັບວຽກທີ່ເປັນທາງການ ແລະບໍ່ເປີດເຜີຍຂໍ້ມູນໃດໜຶ່ງກ່ຽວກັບເດັກ , ຊຸມຊົນທີ່ເປັນຄູ່ຮ່ວມງານ, ເພື່ອນຮ່ວມງານ ແລະ ຂໍ້ມູນທີ່ເປັນສ່ວນຕົວຂອງເດັກ ແລະ ວຽກງານທີ່ກ່ຽວຂ້ອງອື່ນໆເພື່ອໃຫ້ສອດຄ່ອງກັບຂໍ້ກຳນົດ, ກົດລະບຽບ ແລະ ຄຳແນະນຳທີ່ມີໃນປະຈຸບັນ.

**4.** ປ້ອງກັນ, ຄັດຄ້ານ ແລະ ຕໍ່ຕ້ານທຸກການຫາຜົນປະໂຫຍດ ແລະ ການລ່ວງລະເມີດເດັກ.

4.1. ຂ້າພະເຈົ້າຈະບໍ່ລ່ວງລະເມີດເດັກ, ລວມທັງການລ່ວງລະເມີດທາງດ້ານຮ່າງກາຍ ແລະ ການລ່ວງລະເມີດທາງເພດ ແລະ ການຫາຜົນປະໂຫຍດທາງເພດ.

4.2. ຂ້າພະເຈົ້າຮັບຮອງວ່າຈະບໍ່ໃຊ້ອຳນາດໜ້າທີ່ຕຳແໜ່ງຂອງຕົນເພື່ອມີອິດທິພົນ ແລະ ແຊກແຊງການດຳລົງຊີວິດ ແລະ ສະຫວັດດີພາບຂອງເດັກ.

4.3. ຂ້າພະເຈົ້າຈະລາຍງານຄວາມສົງໃສ, ຄວາມເປັນຫ່ວງ ຫຼື ຂໍ້ກ່າວຫາກ່ຽວກັບການຫາຜົນປະໂຫຍດ ແລະ ການລ່ວງລະເມີດໂດຍຄົນຂອງແຄຣ໌, ຄູ່ຮ່ວມງານ ຫຼື ແຂກຜູ້ມາຢ້ຽມຢາມ.

4.4. ຂ້າພະເຈົ້າຈະບໍ່ໃຊ້ພາສາ ຫຼື ມີພຶດຕິກຳທີ່ບໍ່ເຫມາະສົມຕໍ່ເດັກໂດຍການລວນລາມ, ການຂົ່ມເຫັງ, ການຍຸຍົງທາງເພດ, ການດູໝິ່ນ ຫຼື ໃຊ້ວັດທະນະທຳທີ່ບໍ່ເຫມາະສົມ.

4.5. ຂ້າພະເຈົ້າຈະບໍ່ຮຽກຮ້ອງການບໍລິການ ຫຼື ຄວາມນິຍົມຈາກເດັກເພື່ອເປັນການຕອບແທນສຳລັບການປົກປ້ອງ ຫຼື ການຊ່ວຍເຫຼືອ. ຂ້າພະເຈົ້າຈະບໍ່ເຂົ້າໄປກ່ຽວຂ້ອງກັບການຫາຜົນປະໂຫຍດທີ່ພົວພັນເຖິງການມີເພດສຳພັນ, ຄວາມຮູ້ສຶກ, ດ້ານການເງິນ ຫຼື ກ່ຽວຂ້ອງກັບການວ່າຈ້າງເດັກ.

4.6. ຂ້າພະເຈົ້າຈະບໍ່ຈ້າງເດັກນ້ອຍສຳລັບແຮງງານພາຍໃນຄອບຄົວ ຫຼື ແຮງງານອື່ນໆ ທີ່ບໍ່ເຫມາະສົມເນື່ອງຈາກອາຍຸຂອງເຂົາເຈົ້າ ຫຼື ຊ່ວງພັດທະນາການຂອງເດັກ, ເຊິ່ງຂັດຂວາງຕໍ່ການສຶກສາ ແລະ ກິດຈະກຳການພັດທະນາການ ຫຼື ເຮັດໃຫ້ພວກເຂົາມີຄວາມສ່ຽງສູງຕໍ່ການບາດເຈັບ.

4.7. ເມື່ອໃດກໍ່ຕາມທີ່ເປັນໄປໄດ້, ຂ້າພະເຈົ້າຈະຮັບປະກັນວ່າເມື່ອເຮັດວຽກກັບເດັກນ້ອຍຈະມີຜູ້ໃຫຍ່ຄົນອື່ນຢູ່ນຳ.

4.8. ຂ້າພະເຈົ້າຈະບໍ່ເອົາເດັກນ້ອຍຜູ້ທີ່ບໍ່ມີການເບິ່ງແຍງຈາກຜູ່ໃຫຍ່ມາເຮືອນສ່ວນຕົວຂອງຕົນ, ເວັ້ນເສຍແຕ່ວ່າເດັກນ້ອຍຜູ້ນັ້ນຢູ່ໃນຄວາມສ່ຽງ ຕໍ່ການທີ່ຈະຖືກບາດເຈັບ ຫຼື ອັນຕະລາຍທາງດ້ານຮ່າງກາຍ ຢ່າງກະທັນຫັນ.

4.9. ຂ້າພະເຈົ້າຈະບໍ່ນອນຢູ່ໃກ້ກັບເດັກນ້ອຍທີ່ບໍ່ມີການເບິ່ງແຍງຈາກຜູ້ໃຫຍ່ ເວັ້ນເສຍແຕ່ວ່າມີຄວາມຈຳເປັນຢ່າງແທ້ຈິງ, ໃນທຸກກໍລະນີຕ້ອງໄດ້ຮັບການອະນຸຍາດຈາກຫົວໜ້າສາຍງານຂອງຕົນ, ແລະຮັບປະກັນວ່າມີຜູ້ໃຫຍ່ຄົນອື່ນຖ້າເປັນໄປໄດ້ (ໝາຍເຫດ: ກົດລະບຽບນີ້ຈະບໍ່ນຳໃຊ້ກັບລູກຂອງຕົນເອງ).

4.10. ຂ້າພະເຈົ້າຈະບໍ່ຢູ່ພາຍໃຕ້ອິດທິພົນຂອງເຫຼົ້າ ຫຼື ຢາເສບຕິດໃນຂະນະທີ່ພົວພັນກັບເດັກທີ່ບໍ່ມີການເບິ່ງແຍງຈາກຜູ້ໃຫຍ່ (ໝາຍເຫດ: ກົດລະບຽບນີ້ຈະບໍ່ນຳໃຊ້ກັບລູກຂອງຕົນເອງ).

4.11. ຂ້າພະເຈົ້າຈະບໍ່ໃຊ້ວິທີການລົງໂທດທາງດ້ານຮ່າງກາຍຕໍ່ເດັກນ້ອຍ. ຂ້າພະເຈົ້າຈະບໍ່ປະຕິບັດໃນການເຮັດໃຫ້ເດັກນ້ອຍອັບອາຍ, ເຮັດໃຫ້ຂາຍໜ້າ,ຖືກດູຖູກ ຫຼື ເຮັດໃຫ້ເດັກ ຫລື ໄວໜຸ່ມເຊື່ອມເສຍ ຫລື ລ່ວງລະເມີດທາງດ້ານອາລົມ ຫລື ຈິດໃຈຕໍ່ເດັກ ຫຼື ໄວຫນຸ່ມ, ລວມທັງການເປີດເຜີຍຂໍ້ມູນເຮັດໃຫ້ເຂົາເຈົ້າມີຄວາມຮຸນແຮງໃນຄອບຄົວ.

4.12. ຂ້າພະເຈົ້າຈະບໍ່ນຳໃຊ້ຄອມພິວເຕີ, ໂທລະສັບມືຖື, ກ້ອງວິດີໂອ, ກ້ອງຖ່າຍຮູບ ຫຼື ສື່ສັງຄົມທີ່ບໍ່ເໝາະສົມ, ແລະ ຈະບໍ່ໃຊ້ເພື່ອຫາຜົນປະໂຫຍດ ຫຼື ລວນລາມເດັກນ້ອຍ ຫຼື ເຂົ້າເຖິງອຸປະກອນຜ່ານສື່ຕ່າງໆໃນການຫາຜົນປະໂຫຍດຕໍ່ເດັກ.

4.13. ຂ້າພະເຈົ້າຈະບໍ່ໃຊ້ສື່ສັງຄົມທີ່ບໍ່ເໝາະສົມເພື່ອຕິດຕໍ່, ເຂົ້າເຖິງ, ຊັກຊວນ ຫຼື ເປັນໝູ່ກັບເດັກນ້ອຍທີ່ມີສ່ວນຮ່ວມໃນໂຄງການ ຫຼື ກິດຈະກຳທີ່ໄດ້ຮັບທຶນ ຫຼື ຄຸ້ມຄອງໂດຍອົງການແຄຣ໌ ແລະ ໃຊ້ຮູບພາບຂອງເດັກນ້ອຍເຫຼົ່ານັ້ນໃນທາງທີ່ຜິດໃນເວັບໄຊສື່ສັງຄົມສ່ວນຕົວ (ຍົກຕົວຢ່າງ: ເຜີຍແຜ່ທາງອອນລາຍ).

5. ຢຸດການພົວພັນກັບການກະທຳທີ່ຜິດກົດໝາຍ ຫຼື ກິດຈະກຳທີ່ຜິດຕໍ່ສິນລະທຳ, ກິດຈະກຳທີ່ເປັນການລະເມີດສິດທິມະນຸດ ຫຼື ກິດຈະກຳທີ່ເຮັດໃຫ້ເສຍພາບພົດຂອງອົງການແຄຣ໌.

5.1. ຂ້າພະເຈົ້າຈະບໍ່ໃຫ້ການສະໜັບສະໜູນ ແລະ ບໍ່ເຂົ້າໄປພົວພັນກັບການກະທຳໃດໜຶ່ງທີ່ເປັນການຜິດຕໍ່ກົດໝາຍ, ກິດຈະກຳທີ່ເປັນການຫາຜົນປະໂຫຍດ ຫຼື ເປັນການລະເມີດ, ລວມທັງການໃຊ້ແຮງງານເດັກ, ອານາຈານທີ່ກ່ຽວກັບເດັກ ແລະ ການຄ້າມະນຸດ.

5.2. ຂ້າພະເຈົ້າຈະບໍ່ມີສ່ວນຮ່ວມກັບເດັກນ້ອຍທີ່ມີອາຍຸຕໍ່າກວ່າ 18 ປີໃນທຸກຮູບແບບຂອງການມີເພດສຳພັນ ຫຼື ກິດຈະກຳທາງເພດໃດໆ, ລວມທັງການຊື້ບໍລິການທາງເພດ ໂດຍທີ່ບໍ່ຄຳນຶງເຖິງອາຍຸຄວາມຍິນຍອມຂອງທ້ອງຖິ່ນ, ເຊັ່ນກົດໝາຍຂອງທ້ອງຖິ່ນ ຫຼື ກົດຫມາຍລະດັບປະເທດທີ່ຂ້າພະເຈົ້າເຮັດວຽກຢູ່. ຄວາມບໍ່ເຂົ້າໃຈ ຫຼື ຄວາມເຊື່ອຜິດໆ ກ່ຽວກັບອາຍຸຂອງເດັກບໍ່ສາມາດເປັນການປ້ອງກັນຕົວ. ການບໍ່ລາຍງານຄວາມສຳພັນດັ່ງກ່າວອາດນຳໄປສູ່ການລົງໂທດຕາມນະໂຍບາຍ ແລະ ຂັ້ນຕອນຂອງອົງການແຄຣ໌ອົດສະຕາລີ. ຂ້າພະເຈົ້າຈະປະຕິບັດຕາມກົດຫມາຍທັງຫມົດທີ່ກ່ຽວຂ້ອງຂອງປະເທດອົດສະຕາລີ ແລະ ທ້ອງຖິ່ນ, ລວມທັງກົດຫມາຍແຮງງານທີ່ກ່ຽວພັນເຖິງແຮງງານເດັກ.

6. ການເປີດເຜີຍ ແລະ ຄວາມໂປ່ງໃສ

6.1. ຂ້າພະເຈົ້າຈະເປີດເຜີຍທຸກຂໍ້ກ່າວຫາ, ການຕັດສິນລົງໂທດ ແລະ ຜົນຂອງການກະທຳຜິດອື່ນໆ, ທີ່ເກີດຂຶ້ນກ່ອນ ຫຼື ເກີດຂຶ້ນໃນລະຫວ່າງການຮ່ວມງານກັບອົງການແຄຣ໌, ທີ່ກ່ຽວຂ້ອງກັບການຫາຜົນປະໂຫຍດ ແລະ ການລ່ວງລະເມີດເດັກ, ລວມທັງພາຍໃຕ້ກົດໝາຍຮີດຄອງປະເພນີ.

6.2. ຂ້າພະເຈົ້າຈະລາຍງານການປ່ຽນແປງໃນສະຖານະການດັ່ງຕໍ່ໄປນີ້ຕໍ່ຄະນະບໍລິຫານ:

- ການມີສ່ວນຮ່ວມໃນກິດຈະກຳທາງອາຍາ;
- ໃນຂະບວນການ ການປະຕິບັດລະບຽບທາງວິໄນ;
- ການກ່າວຫາ, ການດຳເນີນຄະດີທາງອາຍາ ຫຼື ທາງແພ່ງທີ່ກ່ຽວຂ້ອງກັບການຫາຜົນປະໂຫຍດ ແລະ ການລ່ວງລະເມີດເດັກ.

**7.** ລາຍງານທຸກຄວາມກັງວົນ, ຄວາມສົງໃສ ຫຼື ຂໍ້ກ່າວຫາ

7.1. ຂ້າພະເຈົ້າຈະລາຍງານທັນທີກ່ຽວກັບຄວາມກັງວົນ, ຄວາມສົງໃສ ຫຼື ຂໍ້ກ່າວຫາກ່ຽວກັບການຫາຜົນປະໂຫຍດ ແລະ ການລ່ວງລະເມີດເດັກ ແລະ ການທີ່ບໍ່ປະຕິບັດຕາມນະໂຍບາຍ ຂັ້ນຕອນທີ່ເໝາະສົມ.

# ເອກະສານຊ້ອນທ້າຍ 3

## ຮັບຮູ້ເຖິງກົດລະບຽບຈັນຍາບັນການປ້ອງກັນເດັກ

ຂ້າພະເຈົ້າຮັບຮູ້ວ່າ ຂ້າພະເຈົ້າໄດ້ຮັບ, ອ່ານ ແລະ ເຂົ້າໃຈນະໂຍບາຍການປ້ອງກັນເດັກຂອງອົງການແຄຣ໌ອິດສະຕາລີ ແລະ ກົດລະບຽບຈັນຍາບັນຂອງການປ້ອງກັນເດັກ ແລະ ເຫັນດີທີ່ຈະປະຕິບັດຕາມ, ຍຶດໝັ້ນ ແລະ ສົ່ງເສີມມາດຕະຖານການປ້ອງກັນເດັກຕາມຄວາມສ່ຽງທີ່ ເໝາະສົມຕະຫຼອດເວລາ.

ຂ້າພະເຈົ້າຍັງເຂົ້າໃຈດີວ່າການລະເມີດກົດລະບຽບການປະພຶດເພື່ອການປ້ອງກັນເດັກອາດຈະສົ່ງຜົນໃຫ້ເກີດການລົງໂທດທາງວິໄນ ຫຼື ການຢຸດສັນຍາ, ອີງຕາມຂັ້ນຕອນການປະຕິບັດທາງວິໄນຂອງອົງການແຄຣ໌ອິດສະຕາລີ ແລະ ຍັງສາມາດໃຫ້ມີການດຳເນີນຄະດີອາຍາໄດ້.

______________________________

(ຊື່ PRINT NAME)

______________________________

(ລາຍເຊັນ SIGNATURE)

______________________________

(ວັນທີ DATE)

**ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ**
ຕູ້ປ.ນ 4326, ຖະໜົນໜອງສ້າງທໍ່, ບ້ານ ໜອງສ້າງທໍ່,
ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ : (856-21) 217 727
ອີເມວ: Lao.info@careint.org
ເວັບໄຊ: https://www.careint.org.la/
ເຟສບຸກ/ຢູທູບ: CARE internationnal in Lao PDR

CARE